ນິຍາຍຮັກສະໄໝບູຮານ

# ຂຸນລູ - ນາງອົ້ວ



ອຸທິນ ບຸນຍາວົງ

ນິຍາຍຮັກສະໄໝບູຮານ

# ຂຸນລູ-ນາງອົ້ວ


## ໂດຍ ອຸທິນ ບຸນຍາວົງ



**ຈັດພິມພິມໂດຍ**
**ຫໍສະໝຸດແຫ່ງຊາດ**
**ສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວແຫ່ງຍີ່ປຸ່ນ**

**ອຸປະຖຳ ໂດຍ : ມູນນິທິ ອີໂຕຈຸ**
SPONSOR: ITOCHU FOUNDATION

ວຽງຈັນ ສ.ປ.ປ.ລາວ 1999

| | |
|---|---|
| ຊຸນລູ - ນາງ ອີ້ວ | ນິຍາຍຮັກສະໄໝບູຮານ |
| ອຸທິນ ບຸນຍາວົງ | ຂຽນຮຽບຮຽງ |
| ກົງພັດ ຫລວງຣາດ | ອອກແບບໜ້າປົກ/ຮູບປະກອບ |

| | |
|---|---|
| ພິມດີດ | ຄຳມັກ ວົງສັກດາ |
| ພິມທີ່ | ໂຮງພິມແຫ່ງລັດ |
| ທະບຽນເລກທີ | 22/ຫຫປ/99 |
| ຈຳນວນພິມ | 4,000 ຫົວ |
| ພິມຄັ້ງທີສອງ | ມີນາ 1999 |

| | |
|---|---|
| ພິມຄັ້ງທີນຶ່ງ | 5,000 ຫົວ |
| ໂຮງພິມໄຜ່ໜາມ | 1994 |


ສະຫງວນລິຂະສິດ ດວງເດືອນ ບຸນຍາວົງ


ພິມແຈກຢາຍຕາມໂຄງການສົ່ງເສີມການອ່ານ

# ອ່ານນິທານ ແລ້ວໄດ້ຫຍັງແດ່

ໂຄງການສົ່ງເສີມການອ່ານແຫ່ງຊາດ ທີ່ເລີ່ມຕົ້ນປີ 1990 ຈະສີ້ນສຸດລົງ ໃນປີ 2003 , ແຕ່ການແຈກຢາຍຕູ້ປຶ້ມ, ຖົງປຶ້ມ ຫລືສ້າງຫໍສະຫມຸດນ້ອຍໆ ໃຫ້ແກ່ໂຮງຮຽນປະຖົມ ກັບມັດທະຍົມ ສຳເລັດໄປພຽງ 60% ທັງນີ້ຍ້ອນສາເຫດຫລາຍອັນ ເຊັ່ນ ຈຳນວນໂຮງຮຽນເພີ່ມຂຶ້ນ, ງົບປະມານຈັດຊື້ອຸປະກອນບໍ່ພຽງພໍ, ພະນັກງານມີຈຳກັດ, ການສ້າງປຶ້ມອ່ານທີ່ເຫມາະສົມກັບເດັກນ້ອຍ ຍັງບໍ່ທັນພຽງພໍ, ການອອກວາລະສານສົ່ງເສີມການອ່ານໂດຍກົງ ກໍ່ຍັງບໍ່ມີ. ນອກຈາກງົບປະມານຂອງລັດແລ້ວ ຜ່ານມາ ທາງໂຄງການໄດ້ຮັບການສະຫນັບສະຫນູນຊ່ອຍເຫລືອລ້າ ຈາກອົງການສາກົນ, ສະຖານທູດຕ່າງໆ ໃນ ສ.ປ.ປ.ລາວ, ອົງການ ພັດທະນາເອກະຊົນ (NGO'S) ທີ່ປະຕິບັດງານຢູ່ລາວ, ເພື່ອນມິດຊາວລາວ ແລະ ຕ່າງດ້າວ ທັງພາຍໃນ ແລະ ຕ່າງປະເທດ.

**ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ** ( **ASPB** ) ເປັນຫນຶ່ງໃນບັນດາອົງການດັ່ງກ່າວ ທີ່ໃຫ້ການອຸປະຖຳແກ່ໂຄງການສົ່ງເສີມການອ່ານຂອງພວກເຮົາມາເປັນປະຈຳ ໃນຫລາຍຮູບ ຫລາຍແບບ ເຊັ່ນວ່າ ໃຫ້ງົບປະມານສຳລັບຕູ້ປຶ້ມ, ໃຫ້ທຶນ ແລະ ຈັດຫາຜູ້ຊ່ຽວຊານມາເຝິກອົບຮົມສຳມະນາໃຫ້ຜູ້ຮັບຜິດຊອບຕູ້ ຫລືຖົງປຶ້ມ, ຫ້ອງຮັກອ່ານ, ລົງແຈກຢາຍຕູ້ປຶ້ມ ແລະ ອັນສຳຄັນທີ່ສຸດ ແມ່ນທຶນພິມປຶ້ມ ແລະ ຊື້ປຶ້ມລາວ ແລະ ຕ່າງປະເທດມາໃສ່ຕູ້, ໃຫ້ທຶນຕັ້ງຫ້ອງອ່ານ ພ້ອມອຸປະກອນ ແລະ ອື່ນໆ.

ການຈັດພິມນິທານພື້ນເມືອງຮຽບຮຽງເປັນຄຳທຳມະດາ ເປັນເລື່ອງນຶ່ງ ທີ່ທາງສະມາຄົມໄດ້ສົ່ງເສີມເປັນພິເສດ ນັບແຕ່ການເລືອກເຟັ້ນເລື່ອງ, ການໃຊ້ພາສາທີ່ເຫມາະສົມກັບເດັກນ້ອຍ ການສ້າງນັກແຕ້ມ ນັກຂຽນລາວໃຫ້ມີຄວາມສາມາດ ແຕ້ມຮູບ ແລະແຕ່ງລະຄອນເຈ້ຍ (ກາມິຊິບາຍ). ນັບວ່າເປັນຄວາມພະຍາຍາມ ທີ່ຫນ້າສັນລະເສີນ ແລະ ເປັນປະໂຫຍດແກ່ເດັກ

| | |
|---|---|
| ຊຸນລູ - ນາງ ອີ້ວ | ນິຍາຍຮັກສະໄໝບູຮານ |
| ອຸທິນ ບຸນຍາວົງ | ຂຽນຮຽບຮຽງ |
| ກົງພັດ ຫລວງຮາດ | ອອກແບບໜ້າປົກ/ຮູບປະກອບ |
| ພິມດີດ | ຄຳມັກ ວົງສັກດາ |
| ພິມທີ່ | ໂຮງພິມແຫ່ງລັດ |
| ທະບຽນເລກທີ | 22/ທຫປ/99 |
| ຈຳນວນພິມ | 4,000 ຫົວ |
| ພິມຄັ້ງທີສອງ | ມີນາ 1999 |
| ພິມຄັ້ງທີນຶ່ງ | 5,000 ຫົວ |
| ໂຮງພິມໄຜ່ໜາມ | 1994 |


| | |
|---|---|
| ສະຫງວນລິຂະສິດ | ດວງເດືອນ ບຸນຍາວົງ |


ພິມແຈກຢາຍຕາມໂຄງການສົ່ງເສີມການອ່ານ

# ອ່ານນິທານ ແລ້ວໄດ້ຫຍັງແດ່

ໂຄງການສົ່ງເສີມການອ່ານແຫ່ງຊາດ ທີ່ເລີ່ມຕົ້ນປີ 1990 ຈະສິ້ນສຸດລົງ ໃນປີ 2003 , ແຕ່ການແຈກຢາຍຕູ້ປຶ້ມ, ຖົງປຶ້ມ ຫລືສ້າງຫໍສະໝຸດນ້ອຍໆ ໃຫ້ແກ່ໂຮງຮຽນປະຖົມ ກັບມັດທະຍົມ ສຳເລັດໄປພຽງ 60% ທັງນີ້ຍ້ອນສາເຫດຫລາຍອັນ ເຊັ່ນ ຈຳນວນໂຮງຮຽນເພີ່ມຂຶ້ນ, ງົບປະມານຈັດຊື້ອຸປະກອນບໍ່ພຽງພໍ, ພະນັກງານມີຈຳກັດ, ການສ້າງປຶ້ມອ່ານທີ່ເໝາະສົມກັບເດັກນ້ອຍ ຍັງບໍ່ທັນພຽງພໍ, ການອອກວາລະສານສົ່ງເສີມການອ່ານໂດຍກົງ ກໍ່ຍັງບໍ່ມີ. ນອກຈາກງົບປະມານຂອງລັດແລ້ວ ຜ່ານມາ ທາງໂຄງການໄດ້ຮັບການສະໜັບສະໜູນຊ່ວຍເຫລືອລ້າ ຈາກອົງການສາກົນ, ສະຖານທູດຕ່າງໆ ໃນ ສ.ປ.ປ.ລາວ, ອົງການ ພັດທະນາເອກະຊົນ (NGO'S) ທີ່ປະຕິບັດງານຢູ່ລາວ, ເພື່ອນມິດຊາວລາວ ແລະ ຕ່າງດ້າວ ທັງພາຍໃນ ແລະ ຕ່າງປະເທດ.

**ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ** ( **ASPB** ) ເປັນໜຶ່ງໃນບັນດາອົງການດັ່ງກ່າວ ທີ່ໃຫ້ການອຸປະຖຳແກ່ໂຄງການສົ່ງເສີມການອ່ານຂອງພວກເຮົາມາເປັນປະຈຳ ໃນຫລາຍຮູບ ຫລາຍແບບ ເຊັ່ນວ່າ ໃຫ້ງົບປະມານສຳລັບຕູ້ປຶ້ມ, ໃຫ້ທຶນ ແລະ ຈັດຫາຜູ້ຊ່ຽວຊານມາເຝິກອົບຮົມສຳມະນາໃຫ້ຜູ້ຮັບຜິດຊອບຕູ້ ຫລືຖົງປຶ້ມ, ຫ້ອງຮັກອ່ານ, ລົງແຈກຢາຍຕູ້ປຶ້ມ ແລະ ອັນສຳຄັນທີ່ສຸດ ແມ່ນທຶນພິມປຶ້ມ ແລະ ຊື້ປຶ້ມລາວ ແລະ ຕ່າງປະເທດມາໃສ່ຕູ້, ໃຫ້ທຶນຕັ້ງຫ້ອງອ່ານ ພ້ອມອຸປະກອນ ແລະ ອື່ນໆ.

ການຈັດພິມນິທານພື້ນເມືອງຮຽບຮຽງເປັນຄຳທຳມະດາ ເປັນເລື່ອງນຶ່ງ ທີ່ທາງສະມາຄົມໄດ້ສົ່ງເສີມເປັນພິເສດ ນັບແຕ່ການເລືອກເຟັ້ນເລື່ອງ, ການໃຊ້ພາສາທີ່ເໝາະສົມກັບເດັກນ້ອຍ ການສ້າງນັກແຕ້ມ ນັກຂຽນລາວໃຫ້ມີຄວາມສາມາດ ແຕ້ມຮູບ ແລະແຕ່ງລະຄອນເຈ້ຍ (ກາມິຊິບາຍ). ນັບວ່າເປັນຄວາມພະຍາຍາມ ທີ່ໜ້າສັນລະເສີນ ແລະ ເປັນປະໂຫຍດແກ່ເດັກ

ບັກຣຽນທີ່ສຸດ. ນິທານທີ່ຈັດພິມໃນຊຸດນີ້ ມີເລື່ອງ ***ທ້າວກ່ຳພ້າ-ຜີນ້ອຍ, ຂຸນລູ-ນາງອົ້ວ*** ແລະ ***ເວົ້າດີມີປະໂຫຍດ*** ລ້ວນແຕ່ເປັນນິທານພື້ນເມືອງທີ່ໄດ້ຮັບຄວາມນິຍົມຊົມຊອບ ມາແລ້ວຫລາຍເຊັ່ນຄົນ ແລະ ມາໃນຍຸກນີ້ ກໍ່ໄດ້ຈັດພິມມາແລ້ວຫລາຍເທື່ອ ເຖິງຈະເປັນນິທານແບບອະພິນິຫານ ແຕ່ເນື້ອເລື່ອງ ມີສິນທຳ ຄຳສອນ ທີ່ໃຊ້ໄດ້ທຸກຍຸກສະໄໝ ມີລັກສະນະສາກົນ ເພາະສົ່ງເສີມຄວາມ ກ້າຫານ, ຄວາມເສຍສະລະ, ຄວາມເມດຕາອາລີຕໍ່ກັນ ແລະ ກັນ, ຄວາມຮັກອັນຊື່ສັດບໍລິສຸດ. ການໄດ້ອ່ານ ຫລືໄດ້ຟັງນິທານທີ່ມີເນື້ອໃນງາມໆ ດີໆ ເລື້ອຍໆ ຈະເຮັດໃຫ້ເດັກນ້ອຍ ມີໃຈງົດງາມໄປນຳ, ມັນຈະຄ່ອຍໆຫລໍ່ຫລອມຈິດໃຈເຮົາ ໃຫ້ໂອບອ້ອມອາລີ ມີສິນທຳ. ການອ່ານປຶ້ມແມ່ນວິທີພັດທະນາແນວຈິດໃຈ ແລະ ແນວທາງການປະພຶດປະຕິບັດສ່ວນໃດສ່ວນນຶ່ງ, ເປັນການເປີດຫູເປີດຕາໃຫ້ແຈ້ງ ມີທັດສະນະກວ້າງຂວາງອອກ.

ໂຄງການສົ່ງເສີມການອ່ານຂອງພວກເຮົາ ກໍ່ແມ່ນສ່ວນນຶ່ງຂອງວຽກງານການພັດທະນາຊັບພະຍາກອນມະນຸດ ທີ່ພັກ ແລະ ລັດຖະບານແຫ່ງ ສ.ປ.ປ.ລາວ ໄດ້ຮຽກຮ້ອງໃຫ້ທຸກພາກສ່ວນ ສົມທົບໃຫ້ຄວາມຮ່ວມມື. ການປະກອບທຶນຈັດພິມປຶ້ມ ເພື່ອແຈກຢາຍຕາມໂຄງການສົ່ງເສີມການອ່ານຈຶ່ງແມ່ນສ່ວນປະກອບສຳຄັນອັນນຶ່ງ ຢູ່ໃນວຽກງານນີ້. ຂໍສະແດງຄວາມຮູ້ບຸນຄຸນ ແລະ ຊົມເຊີຍຢ່າງຈິງໃຈມາຍັງ ຄະນະສະມາຄົມ ASPB, ຊາວຍີ່ປຸ່ນຜູ້ຫ່ວງໃຍ ຮັກແພງເດັກນ້ອຍລາວດ້ວຍ. ຂໍອຳນວຍອວຍໄຊໃຫ້ບັນດາທ່ານມີຄວາມສຸກ ຄວາມຈະເລີນ ຍິ່ງໆຂຶ້ນໄປດ້ວຍ.

ວຽງຈັນ, ວັນທີ 5 ມີນາ 1999

ກົງເດືອນ ເນດຕະວົງ

ຫົວໜ້າໂຄງການສົ່ງເສີມການອ່ານແຫ່ງຊາດ

ຜູ້ອຳນວຍການຫໍສະໝຸດແຫ່ງຊາດ

## ເຖິງ ທ່ານຜູ້ອ່ານ

ນິທານຂຸນລູ-ນາງອົ້ວ ມີຫລາຍສຳນວນ ແລະ ເລົ່າຕໍ່ກັນມາຫລາຍຊົ່ວອາຍຸຄົນ, ສະນັ້ນ ຈຶ່ງມີອັນແຕກຕ່າງກັນໃນລາຍລະອຽດ, ທີ່ຂຽນເປັນລາຍລັກອັກສອນໄວ້ແລ້ວ ກໍມີທັງຂະຫນາດຫຍໍ້ ແລະ ຂະຫນາດຍາວ. ສຳນວນທີ່ທ່ານອ່ານຢູ່ນີ້ ຂ້າພະເຈົ້າສັງລວມ ມາຈາກຫລາຍແຫລ່ງ ແຕ່ກໍໄດ້ອີງໃສ່ສຳນວນຂອງວັດຫົວຊຽງ (ຫລວງພະບາງ) ເປັນພື້ນຖານ. ຄວາມບໍ່ແຈ່ມແຈ້ງກໍຢູ່ບ່ອນວ່າ ພໍ່ຂອງຂຸນລູ ແລະ ພໍ່ຂອງນາງອົ້ວ ແມ່ນໃຜ ມີຖານະຢ່າງໃດ, ບາງສຳນວນວ່າ ເປັນຂັ້ນພະຍາປົກຄອງເມືອງ ແຕ່ທັງສອງຕາຍໄປແລ້ວ, ສ່ວນແມ່ທັງສອງນັ້ນ ມີຖານະຢ່າງໃດ ແລະ ກ່ຽວຂ້ອງກັນແນວໃດ ກໍບໍ່ລັກບໍ່ແນ່. ບາງສຳນວນວ່າເປັນສ່ຽວກັນ ຫລື ເປັນຝາແຝດກັນ. ບົດກອນບັນຍາຍການດຳລົງຊີວິດແບບຄົນທຳມະດາທົ່ວໄປ ແຕ່ບາງເຫດການ ກໍບັນຍາຍວ່າ ຢູ່ໃນຫໍໂຮງຂອງພະຍາ, ເຊັ່ນ ບັນຍາຍວ່າ ນາງອົ້ວຕ້ອງໄປສວນ ເກັບມອນມາລ້ຽງມ້ອນ ແຕ່ນາງຢູ່ໃນຫໍໂຮງ ຫລື ວັງ ຊຶ່ງຕາມແບບສະບັບນິທານທົ່ວໄປນັ້ນ ຖ້າເປັນທິດາ ຫລືລູກສາວພະຍາເມືອງຈະຕ້ອງໄປຊົມສວນອຸທິຍານ. ສ່ວນຊື່ຂອງຕົວໂກງທີ່ຈະເອົາ ນາງອົ້ວໄປຈາກຂຸນລູນັ້ນ ບາງສຳນວນວ່າ ຊື່ ຂຸນເທືອງ ບາງສຳນວນວ່າ ຊື່ຂຸນລາງ, ລາຍລະອຽດ ທີ່ແຕກຕ່າງກັນເຫລົ່ານີ້ ຂໍໃຫ້ຖືວ່າເປັນເລື່ອງສຳຮອງ ຫລື ບໍ່ສຳຄັນ. ໃຈຄວາມຂອງເລື່ອງ ແມ່ນຄວາມຮັກຂອງບ່າວສາວ ທີ່ມີອຸປະສັກ

ແລະ ສຸດລົງດ້ວຍໂສກນາຕະກຳ. ເລື່ອງທຳນອງນີ້ ມີຢູ່ໃນທຸກຊາດ ທຸກພາສາ ແລະ ເປັນເລື່ອງທີ່ປະທັບໃຈຄົນ ມາຕະຫລອດເວລາ ອັນຍາວນານ.

ຂ້າພະເຈົ້າພູມໃຈ ທີ່ລາວເຮົາກໍມີນິທານກ່ຽວກັບ ຄວາມຮັກອະມະຕະ ແລະ ເປັນນິທານຂອງລາວແທ້ໆ ເພາະຊື່ສະຖານທີ່ ແລະ ຊື່ຕົວລະຄອນ ເປັນລັກສະນະລາວໆ ຕ່າງຈາກນິທານສ່ວນຫລາຍ ທີ່ມີຕົ້ນກຳເນີດມາຈາກ ອິນເດຍ ຊຶ່ງຊື່ບ້ານເມືອງ ແລະ ຕົວລະຄອນເປັນພາສາບາລີ ເຊັ່ນ: ນະຄອນ ມິຖິລາ, ນະຄອນເປັງຈານ, ທ້າວກາລະເກດ ແລະ ທ້າວສັງສິນໄຊ ເປັນຕົ້ນ. ໂດຍທົ່ວໄປ ນິທານລາວແທ້ໆ ເປັນນິທານປາກເປົ່າ ແຕ່ເມື່ອເຖິງຂັ້ນຕອນ ທີ່ຕ້ອງຈານໃສ່ໃບລານໄວ້ແລ້ວ ຜູ້ຂຽນ ຫລື ຜູ້ຈານ ມັກດຶງໄປໃສ່ໃຫ້ເປັນ ເລື່ອງ ທ້າວຂຸນພະຍາເມືອງ ຕາມແບບສະບັບນິທານທັງຫລາຍ ດັ່ງທີ່ ເຮົາພົບເຫັນຢູ່ໃນລຳເລື່ອງ ອັນເປັນແບບສະບັບການຂຽນນິທານ ທີ່ສືບຕໍ່ກັນມາ.

ຫ້າມຈຳໜ່າຍ

ນິຍາຍຮັກອະມະຕະ ທີ່ເຕັມໄປດ້ວຍອຸປະສັກນີ້ ມີມາແຕ່ບູຮານ ແລະ ປັດຈຸບັນນີ້ ກໍຍັງມີນິຍາຍຮັກແບບນີ້ຢູ່ ແລະ ຈະມີຢູ່ຕໍ່ໄປອີກ, ມັນເປັນເລື່ອງທຳມະຊາດຂອງຈິດໃຈມະນຸດ ແລະ ເລື່ອງທຳນອງນີ້ ກໍປະທັບໃຈຜູ້ຄົນຕະຫລອດມາ.

**ອຸທິນ ບຸນຍາວົງ**

ນິທານເລື່ອງນີ້ ກໍ່ຄວາມສະເທືອນໃຈແກ່ຜູ້ຄົນ ແຕ່ບູຮານນະການມາແລ້ວ. ເລື່ອງເລີ່ມຕົ້ນຂຶ້ນ ເມື່ອແມ່ຍິງສອງຄົນພາກັນໄປອາບນ້ຳ ຢູ່ແຄມທ່າ, ນ້ຳຫ້ວຍໃສ ໄຫລເຢັນຈົນຫລຽວເຫັນຫມູ່ປາ, ບາງຄັ້ງກໍມີໃບໄມ້ແຫ້ງຫລົ່ນໄຫລມາຕາມຫນ້ານ້ຳ. ທັງສອງພາກັນລ່ອງລອຍຢ່າງມີຄວາມສຸກເພາະອາກາດຮ້ອນອົບເອົ້າ ແຕ່ເມື່ອໄດ້ລົງນ້ຳ ກໍຮູ້ສຶກເຢັນກາຍ ສະບາຍຕົວ. ຂະນະອາບນ້ຳຢູ່ນັ້ນ ກໍມີຫມາກສ້ານຫນ່ວຍຫນຶ່ງໄຫລມາ.

ຫມາກສ້ານເປັນຫມາກໄມ້ປ່າ ຫນ່ວຍມົນໆສີເຫລືອງຂະຫນາດທໍ່ຫມາກມັງຄຸດ, ວິທີກິນ ກໍຄືຜ່າທາງຂວາງອອກເປັນໂພ່ງ ຄືດັ່ງຜ່າຫມາກພ້າວຫ້າວອອກເປັນໂພ່ງຂວ້ຳ ແລະໂພ່ງຫງາຍ. ຫມາກສ້ານຕົ້ນນີ້ ຢູ່ແຄມນ້ຳຍ່ານເຫນືອຂຶ້ນໄປ

---

ເມື່ອຫລົ່ນຈາກຕົ້ນ ກໍກິ້ງລົງຫ້ວຍ ແລ້ວໄຫລລົງມາຕາມໜ້ານໍ້າ.

" ໝາກສານໄຫລນໍ້າມາ " ຍິງຄົນໜຶ່ງ ຈັບໝາກໄມ້ແລ້ວຍົກໃຫ້ຜູ້ເປັນໝູ່ເບິ່ງ.

" ເປັນຕາກິນນໍ້, ຊິໂຊກຫຍັງບໍ ? " ຜູ້ເປັນໝູ່ວ່າ.

ແມ່ຍິງທັງສອງແບ່ງໝາກສານກິນກັນຄົນລະໂພ່ງດ້ວຍຄວາມພໍອົກພໍໃຈ.

ເວລາຜ່ານໄປຫ້າ-ຫົກປີ, ຢູ່ເມືອງກາຍ ມີເດັກນ້ອຍສອງຄົນຫລິ້ນນຳກັນ ດ້ວຍຄວາມຮັກແພງເກືອບຕະຫລອດເວລາ. ຄົນໜຶ່ງເປັນຊາຍຊື່ວ່າ ລູ ຫລື ຂຸນລູ, ອີກຄົນໜຶ່ງເປັນຍິງຊື່ວ່າ ອົ້ວຄຮູມ ຫລື ທີ່ຄົນທົ່ວໄປເອີ້ນວ່າ ນາງອົ້ວ. ເດັກທັງສອງ ເກີດມື້ດຽວກັນ, ຂຸນລູ ເປັນລູກຂອງແມ່ຍິງຜູ້ທີ່ກິນໝາກສານໂພ່ງຂວາ, ສ່ວນນາງອົ້ວ ເປັນລູກຂອງແມ່ຍິງ ຜູ້ທີ່ກິນໂພ່ງຫວາຍ. ເດັກທັງສອງປຽບຄືຄົນລະໂພ່ງ



ຂອງໝາກສ້ານໜ່ວຍດຽວ. ການໄດ້ຢູ່ໃກ້ຊິດຕິດແທດກັນ ກໍເພາະແມ່ຂອງເດັກເປັນສ່ຽວກັນ ທັງຢູ່ໃກ້ກັນ ແລະ ໄປຫາມາສູ່ກັນເປັນປະຈຳ. ເວລາທີ່ຜູ້ເປັນແມ່ທັງສອງນັ່ງລົມກັນ ຂຸນລູກັບນາງອົ້ວ ກໍພາກັນຫລິ້ນຢູ່ເດີ່ນບ້ານ ໂດຍເອົາໃບໄມ້ທີ່ດິນ ແລະ ສົມມຸດເປັນເຂົ້າໜົມ ແລ້ວກໍແບ່ງປັນກັນ, ບາງ

ເທື່ອກໍເອົາເຂົ້າຫນົມມາຫາຕາມແຄ່ງ ຕາມຂາຂອງກັນ ແລະ ກັນ ເຮັດຄືວ່າ ຫາຕຸ່ມລັນໃຫ້ກັນ. ນາງອົ້ວມີເອື້ອຍ ຊື່ວ່າ ເອິກແພນ ແຕ່ບໍ່ຄ່ອຍຫລິ້ນນຳກັນເລີຍ, ສ່ວນຂຸນລູມີນ້ອງຊາຍ ຊື່ວ່າ ຂຸນຄວນ.

ມື້ຫນຶ່ງ ເດັກທັງສອງຫລິ້ນນຳກັນຢູ່ກ້ອງຕົ້ນງິ້ວ ແຄມຮົ້ວ. ຍາມນັ້ນດອກງິ້ວ ພວມບານເປັນສີແດງເຮືອງເຮື່ອ ມີຫລາຍ ດອກຫລົ່ນລົງເດຍລະດາດຢູ່ຕາມພື້ນດິນ, ຂຸນລູກັບນາງອົ້ວ ເກັບເອົາມາກອງໄວ້ ເພາະດອກງິ້ວທີ່ຫລົ່ນໃຫມ່ໆນັ້ນ ຍັງສົດ ຊື່ນ ເປັນຕາຈັບຕາບາຍ. ເບື້ອງເທິງ ຫມູ່ນົກທີ່ມາຕອມ ດອກງິ້ວນັ້ນ ສົ່ງສຽງຮ້ອງ ເຈື້ອຍແຈ້ວ, ມີນົກສາລິກາ ນົກແຂວ ນົກແຂກແກ້ວ ນົກອ້ຽງ ແລະ ອື່ນໆ. ຄາວຫນຶ່ງ ດອກງິ້ວຫລົ່ນຖືກຫລັງນາງອົ້ວ, ທັງສອງຫລຽວເບິ່ງຫນ້າກັນ ແລ້ວກໍແຫງນຂຶ້ນເທິງ ເຫັນນົກອ້ຽງພວມຕອມດອກຢູ່ຊື່ຫົວ, ທັງສອງກໍເລີຍຫົວສະອຶກສະອ້ອຍ ຕາມປະສາເດັກ ຊຶ່ງ ເປັນຕາຫນ້າຮັກ ຄືໄກ່ນ້ອຍກິນນ້ຳ, ມັນເປັນຄວາມໄຮ້ດຽງສາ

ທີ່ຫນ້າທະນຸຖະຫນອມ.ບໍ່ດົນກໍມີດອກງິ້ວຫລົ່ນລົງມາອີກ ແລະ ລົງມາຕື່ມອີກເລື້ອຍໆ.

ເມື່ອເມື່ອຍເກັບດອກງິ້ວ ທັງສອງກໍໄປທີ່ບ່ອນໂພນ ແລະ ພາກັນແລ່ນຕະລູດ ໂດຍນາງອົ້ວ ນັ່ງເທິງກາບຫມາກ ສ່ວນ ຂຸນລູ ເປັນຜູ້ແກ່ກາບຫມາກໃຫ້ເລື່ອນໄຫລລົງໂພນ. ບາງເທື່ອ ກໍແມ່ນນາງອົ້ວ ເປັນຜູ້ແກ່. ມີບາງເທື່ອຝ່າຍທີ່ແກ່ກໍສະດຸດລົ້ມ ແລ້ວຜູ້ທີ່ນັ່ງຢູ່ກໍເລື່ອນລົງມາເຕັງກັນ ແລ້ວທັງສອງກໍກິ້ງ ລົງໂພນ ຈົນຮອດດິນພຽງ, ຂຸນລູກັບນາງອົ້ວ ມ່ວນຢູ່ກັບການ ແລ່ນຕະລູດເປັນເວລາດົນໆ.

ເມື່ອຮອດຍາມຝົນ ຢູ່ເດີ່ນແຄມນາ ມີເຫັດບາງຊະນິດ ອອກດອກ ທັງສອງກໍພາກັນ ໄປເກັບເອົາ, ເມື່ອເອົາມາຮອດ ເຮືອນ ຜູ້ເປັນແມ່ເຫັນວ່າມີທັງເຫັດກິນໄດ້ ແລະ ເຫັດຕາຍເບື່ອ ເລີຍໄດ້ເອົາຖິ້ມຫລາຍກວ່າເຄິ່ງ.

ຂຸນລູກັບນາງອົ້ວຫລິ້ນນຳກັນຕະຫລອດມາ, ເມື່ອເຫັນຂຸນລູຢູ່ບ່ອນໃດ ກໍເຫັນ ນາງອົ້ວຢູ່ບ່ອນນັ້ນ.

ວັນເວລາຜ່ານໄປເຫິງນານ.

ດອກງິ້ວບານອີກຫລາຍເທື່ອ, ລະດູຝົນຜ່ານໄປຫລາຍຮອບ ຈົນບໍ່ມີໃຜສົນໃຈນັບ. ຫມາກສ້ານສຸກແລ້ວຫລົ່ນລົງນ້ຳຫລາຍຕໍ່ຫລາຍຫນ່ວຍ. ມື້ຫນຶ່ງ ຂະນະທີ່ເກັບເຫັດຢູ່ ຝົນກໍຕົກລົງມາຫາໃຫຍ່ ຂຸນລູເອົາໃບຕອງກ້ວຍກ້ານຫນຶ່ງມາປົກຫົວແລ້ວທັງສອງ ກໍຍ່າງຮຽງກັນກັບເມືອ. ແມ່ນາງອົ້ວເຫັນດັ່ງນັ້ນ ເລີຍເວົ້າວ່າ: "ເປັນຫຍັງບໍ່ເອົາ ໃບຕອງຄົນລະກ້ານລະລູກ ?".

"ລູກບໍ່ມີມືຈັບເດ້ ເພາະຕ້ອງຫິ້ວກະຕ່າ." ນາງອົ້ວບອກແມ່.

"ລູກເປັນຜູ້ຈັບໃບຕອງ ກັ້ງໃຫ້ອົ້ວ." ຂຸນລູວ່າຕາມຄວາມຊື່.

"ເບິ່ງຜູ້ໃດກໍໃຫຍ່ສູງແລ້ວເດີ ເຮັດຄືເປັນເດັກນ້ອຍແບບເກົ່າບໍ່ໄດ້ໃດ." ແມ່ນາງອົ້ວເຕືອນ.

ຂຸນລູແນມເບິ່ງໜ້ານາງອົ້ວ, ຕາຕໍ່ຕາເຈີກັນ, ຕາຄູ່ນີ້ເຄີຍເບິ່ງກັນມາແລ້ວ ຈົນເປັນທຳມະດາ, ແຕ່ຄຳເຕືອນຂອງຜູ້ເປັນແມ່ ເຮັດໃຫ້ທັງສອງຄິດເລິກ ແລະ ຮູ້ສຶກວ່າ ແສງຕາທີ່ເຈີກັນເທື່ອນີ້ ມີຄວາມໝາຍພິເສດ ຈົນນາງອົ້ວ ປ່ອຍແສງຕາລົງຕ່ຳ.



ເມື່ອອາຍຸຢ່າງເຂົ້າສິບສີ່ ນາງອົ້ວຄຳ່ຮົມ ເປັນສາວນ້ອຍທີ່ງາມຢາດຍ້ອຍ ບໍ່ມີໃຜທຽບໄດ້, ຄວາມງາມຂອງນາງຊ່າລືໄປຫລາຍເມືອງ ລວມທັງເມືອງຊຽງຂອນ ອັນມີທ້າວຂຸນເທືອງ ປົກຄອງຢູ່.

ເມື່ອນັ້ນ ຄຳຊ່າເທົ້າ ທຸກທີ່ວຫລາຍເມືອງ
ເຂົ້າວ່າ ນາງຄານງາມ ສິ່ງສາວສະຫວັນຟ້າ
ຊ່າຮອດທ້າວ ບາຊື່ ຂຸນເທືອງ
ສະເຫວີຍເມືອງຊຽງຂອນ ຕໍ່ແດນປະກັນພຸ້ນ

ເມື່ອມີທ້າວພະຍາຕ່າງເມືອງສົນໃຈນາງອົ້ວ ຜູ້ໂສມງາມປານອິນແຕ້ມແຕ່ງ ຜູ້ເປັນແມ່ກໍແຮ່ງທະນົງໃຈ ຈົນກາຍເປັນຄວາມອວດອົ່ງ. ທ້າວຂຸນເທືອງ ພະຍາເມືອງຊຽງຂອນມີຄວາມປະສົງຢາກໄດ້ເປັນມິ່ງມະເຫສີ ເພື່ອເປັນການສ້າງຄວາມສຳພັນອັນແໜ້ນແກ່ນ ລະຫວ່າງເມືອງກາຍ ກັບເມືອງຊຽງຂອນ. ຕໍ່ມາພະອົງສົ່ງຂຸນຊື່ນ ເປັນຜູ້ຕາງໜ້າ

ໄປສູ່ຂໍເອົານາງອົ້ວ ນຳຜູ້ເປັນແມ່ ໂດຍຖືກຕ້ອງຕາມປະເພນີ. ແມ່ນາງອົ້ວ ຕົກລົງດ້ວຍຄວາມຍິນດີ ໂດຍທີ່ບໍ່ໄດ້ຖາມຄວາມສະຫມັກໃຈຂອງລູກສາວເລີຍ ແລະ ນັດຫມາຍວ່າ ປີຖັດໄປຈຶ່ງມາແຕ່ງດອງ ເພາະດຽວນີ້ນາງອົ້ວຍັງນ້ອຍຢູ່ ແລະບໍ່ທັນມີຄວາມຮູ້ເລື່ອງຮີດຄອງຢ່າງພຽງພໍເທື່ອ. ຂຸນຊື່ນຕ່າວເມືອຊຽງຂອນ ດ້ວຍຄວາມພໍໃຈໃນຜົນສຳເລັດ ແລະນຳເອົາຂ່າວດີໄປທູນບອກຂຸນເທືອງ ຜູ້ຄອງຖ້າຟັງດ້ວຍໃຈຈົດຈໍ່. ສຳລັບຂຸນເທືອງ ບໍ່ມີຄວາມຍິນດີອັນໃດຈະທຽບເທົ່າ ເລື່ອງທີ່ຈະໄດ້ ນາງອົ້ວມາເປັນຄູ່ຊີວິດ ເຖິງແມ່ນວ່າ ຈະເຍື້ອນໄປອີກປີຫນຶ່ງກໍຕາມ. ຖືໄດ້ວ່າ ເປັນເວລາອັນດົນແສນດົນສຳລັບຂຸນເທືອງ, ແລະ ໃນໄລຍະທີ່ຄອງຄອຍວັນມະຫາມຸງຄຸນນີ້ ຂຸນເທືອງກໍສົ່ງຂອງຂວັນໄປໃຫ້ອົ້ວຄ່ຽມ ເພື່ອສະແດງຄວາມຮັກອັນຈິງໃຈ.

ແຕ່ນາງອົ້ວ ບໍ່ຍອມຊອມນຳເຄື່ອງຂອງດັ່ງກ່າວ, ນາງຍັງເປັນຫມູ່ຮັກຫມູ່ແພງ ທີ່ສະຫນິດແຫນ້ນກັບຂຸນລູ

ຢ່າງສະເໜີຕົ້ນສະເໜີປາຍ. ຈິດໃຈຂອງທັງສອງຜູກພັນກັນບໍ່ມີຫຍັງປ່ຽນແປງ ແລະ ຍິ່ງຜູກພັນຝັ້ນກ້ຽວເຂົ້າຕື່ມອີກ ເມື່ອນາງອົ້ວຮູ້ວ່າ ຕົນຈະຕ້ອງຖືກພັດພາກຈາກຂຸນລູໄປໃນເວລາຂ້າງໜ້າ. ສ່ວນຂຸນລູເວົ້າວ່າ: "ອ້າຍເວົ້າຫຍັງເກືອບບໍ່ອອກ ທີ່ນ້ອງຈະໄປເປັນຂອງຜູ້ອື່ນໄຫໄກ, ມັນເປັນຄວາມປະສົງຂອງແມ່ ຊຶ່ງນ້ອງຂືນເພິ່ນບໍ່ໄດ້ ..."



ເພື່ອໃຫ້ຂຸນລູເຊື່ອຫມັ້ນ ແລະ ບໍ່ຫມົດກຳລັງໃຈ ນາງອົ້ວສາລະພາບວ່າ ນາງຈະບໍ່ມີມື້ປ່ຽນແປງເປັນອື່ນ ນອກຈາກຄວາມຕາຍມາແຍກໃຫ້ທັງສອງອອກຈາກກັນ. ນາງວ່າ:

ອັນແຕ່ໃຕ້ລຸ່ມຟ້າ ທົ່ວແຫ່ງເມືອງຄົນ ນີ້ນາ
ກໍບໍ່ປານຂຸນລູ ຍອດຊາຍດວງອ້າຍ
ໃຫ້ນ້ອງໄກຕົວອ້າຍ ກໍແຫນງຕາຍມໍລະເນດ
ອົ້ວຫາກຕັ້ງຕໍ່ເຈົ້າ ພະອອນອ້າຍຜູ້ດຽວ.

ຈາກຄວາມໃກ້ຊິດຕິດແທດກັນຂອງຊາຍຍິງຄູ່ນີ້ ມັນກັບກາຍເປັນຄວາມຜູກພັນອັນດູດດື່ມ ແລະ ເມື່ອມີເຫດການໃດຫນຶ່ງທີ່ຈະມາແຍກໃຫ້ທັງສອງອອກຫ່າງກັນ ພະລັງດຶງດູດກໍຍິ່ງເພີ່ມຂຶ້ນເປັນທະວີຄູນ.

ນາງອົ້ວເອົາຜ້າສະໄບຄຳ ມອບໃຫ້ຂຸນລູ ເພື່ອສະແດງຄວາມຊື່ສັດບໍລິສຸດ, ຂຸນລູຮັບເອົາມາລອງບ່ຽງບ່າຫົວໃຈປ່ຽມລົ້ນໄປດ້ວຍຄວາມສຸກ ທັງຮູ້ສຶກຄືວ່າ ຕົນຕົວ

ເປັນຄືປຸຍເມກ ແລະ ລອຍຂຶ້ນໄປກາງອາກາດ, ທ້າວເດ່ນີ ດຶງເອົານາງອົ້ວ ແລ້ວທັງສອງກໍທະຍານຂຶ້ນເທິງຟ້າ ບິນເປັນຄູ່ໄປສູ່ເມືອງແມນແດນອິນານ ບິນໄປໄກໆ ໃຫ້ຫ່ວິດ ຈາກ ທ້າວຂຸນເທືອງ ຢ່າງຕະຫລອດກາລະນານ. ແຕ່ວ່າ ນີ້ກໍເປັນພຽງຄວາມ ຄິດຝັນຂອງທັງສອງເທົ່ານັ້ນ.





ວັນເວລາທີ່ທັງສອງຢູ່ໃກ້ຊິດກັນນັ້ນ ຜ່ານໄປຢ່າງໄວວາ. ແລ້ວຟ້າຜືນນີ້ກໍພາຍ່າງເຂົ້າສູ່ປີທີ່ທໍລະມານໃຈ ນັ້ນຄືປີທີ່ຂຸນເທືອງ ຈະມາແຕ່ງດອງເອົານາງອົ້ວຄຳຮົມ ຕາມທີ່ຜູ້ເປັນແມ່ໄດ້ຫມັ້ນຫມາຍໄວ້. ໄພ່ພົນເມືອງກາຍ ກັບເມືອງຊຽງຂອນອາດດຳລົງຊີວິດຢູ່ຢ່າງສະຫງົບ ໃຕ້ຟ້າຜືນດຽວນີ້ ແຕ່ຂຸນລູນາງອົ້ວ ບໍ່ສະຫງົບໃນຈິດໃນໃຈເລີຍ. ທັງສອງຢາກຢູ່ແຕ່

ໃນໂລກນ້ອຍໆ ຕາມລຳພັງ ບໍ່ຢາກໃຫ້ມີຄຳວ່າ ຫ່າງໄກຈາກກັນ ຫາຍໃຈເຂົ້າອອກເປັນຈັງຫວະດຽວກັນ, ດັ່ງນີ້ທັງສອງຈຶ່ງພາກັນໄປເຮົ້າປ່າຢູ່ສວນມອນ ທີ່ຫ່າງໄກຈາກຜູ້ຄົນ ແລະ ຖືເປັນຄວາມລັບທີ່ສຸດ. ຢູ່ບ່ອນນີ້ ເຂົາທັງສອງ ຄືດັ່ງໄດ້ຕົກໄປສູ່ອີກໂລກໜຶ່ງ ທີ່ມີແຕ່ຄວາມສົດຊື່ນ ຄວາມສະຫງົບຮົ່ມເຢັນ, ມີສີຂຽວ ໃບມອນເປັນສິ່ງແວດລ້ອມຫໍ່ຫຸ້ມ ມີສາຍລົມພັດເປົ່າ ຊຳລະຄວາມອຸກເອົ້າກັງວົນໃຈ ໃຫ້ດັບມອດໄປ, ເທິງຟ້າ ກ້ອນເຝື້ອລອຍລ່ອງຢ່າງເປັນອິດສະຫລະ, ທັງສອງເວົ້າຢອກລໍ້ກັນ ແລະ ຫົວສຽງດັງພໍແວ່ວໆ.

" ຄິດເຫັນຕອນດອກງິ້ວຫລົ່ນຖືກຫລັງຂອງອີ່ວ " ຂຸນລູເວົ້າຮອດຄວາມຫລັງ.

" ຈື່ໄດ້ວ່າ ມັນບໍ່ເຈັບ ແຕ່ກໍຕື່ນຍຸບ " ນາງອົ້ວແນມເບິ່ງຂຸນລູ ແລ້ວທັງສອງກໍຫົວ, ຫົວດ້ວຍຄວາມປະເອີບໃຈໃຫ້ກັບວັນເວລາທີ່ເຕັມໄປດ້ວຍຄວາມຊົງຈຳອັນດີ ຊຶ່ງຈະບໍ່ຫວນກັບຄືນມາອີກ.

---

ບາງຄັ້ງ ກໍມີສຽງນົກຮ້ອງຢູ່ໃກ້ໆ, ທັງສອງມັກຟັງສຽງທຸກຢ່າງ ທີ່ເກີດຂຶ້ນຕາມທຳມະຊາດ ເຊັ່ນ ກໍໄຜ່ສຽດສີກັນດັງມາພໍແວ່ວໆ, ທະນີຮ່າຍໄມ້ດັງມາແຕ່ເປີ້ນພູ, ນົກກາເວົາຮ້ອງຫາຄູ່ດັງມາອີ່ອ່ອນ ສຽງນົກດັງເສົ້າສ້ອຍ ແລະ ຊຶມເລິກເຂົ້າໄປໃນ ວິນຍານ, ເມື່ອລົມປຸດພັດຜ່ານຄາວໃດ ໂລກກໍຄືວ່າປຸດໜູບ ແລ້ວຄວາມມືດວູບ ກໍມີນ້ຳໜັກອັນມະຫາສານທີ່ກົດໜ່ວງຊາຍຍິງຄູ່ນີ້ໃຫ້ຈົມດິ່ງລົງສູ່ຫ້ວງພະວັງ.

ນາງອົ້ວ ລັກໃຈແມ່ໄປເຮົ້າປ່າກັບຂຸນລູຫລາຍເທື່ອ. ທຳອິດກໍບໍ່ມີໃຜຮູ້ເຫັນ, ແຕ່ຕໍ່ມາ ພຶດຕິກຳຂອງທັງສອງກໍບໍ່ຫລີດສາຍຕາຂອງ ເອິກແພນ ຜູ້ເປັນເອື້ອຍ, ດັ່ງນີ້ເລື່ອງຈຶ່ງໄປຊອດຮອດຫູຂອງຜູ້ເປັນແມ່ ຢ່າງຫລີກບໍ່ພົ້ນ.

ແມ່ເອີ້ນນາງອົ້ວມາດ່າວ່າ ຢ່າງຮຸນແຮງ ແບບບໍ່ເຄີຍຮ້າຍ ມາກ່ອນ :

---

" ຄົນບໍ່ດີ ຮູ້ຢູ່ວ່າ ຍັງຄາຄວາມກັບຂຸນເທືອງຢູ່ ເປັນຫຍັງຈຶ່ງເຮັດແນວບໍ່ດີຈັ່ງຊີ້ ລູກອັບປີ !" ແມ່ຊີ້ໜ້ານາງອົ້ວ.

" ລູກບໍ່ໄດ້ເຮັດໂລເລດອກແມ່ ລູກກັບຂຸນລູ ເປັນສ່ຽວກັນມາແຕ່ນ້ອຍ ຮັກແພງກັນແບບໝູ່ເພື່ອນ ລູກເວົ້າອີຫລີ, ແມ່ນໃຜມາຫາຄວາມໃສ່ລູກ ?" ນາງອົ້ວພະຍາຍາມອະທິບາຍໃຫ້ແມ່ເຂົ້າໃຈ.

" ແກ່ນຕາຂອງແມ່ນີ້ແຫລະເຫັນເອງ ພວກສູໄປເຮົ້າປ່າສວນມອນ ໄປຫລິ້ນກັນຢູ່ຫັ້ນ, ເຫລືອໃຈເດ ລ້ຽວມາໃຫຍ່ແລ້ວຊ້ຳມາທຳລາຍຄວາມຫວັງ, ຊິມີຄ່າຫຍັງ ເຫລືອ ບັດນີ້ !".

" ພວກລູກໄປທ່ຽວຫລິ້ນທຳມະດາບໍ່ໄດ້ເຮັດແນວບໍ່ດີເລີຍ"

" ຢ່າຊູ່ມາເວົ້າ ອົນຄາຖາຫຍັງເວົ້າ ໃຜກໍບໍ່ເຊື່ອ, ຂຸນລູມັກແທ້ເປັນຫຍັງ ມັນບໍ່ມາເວົ້າມາຈານຳແມ່ ແບບນີ້ມັນທຳລາຍກັນ !"

---



ແມ່ນາງອົ້ວຖືເປັນເລື່ອງເສຍຫາຍຢ່າງໃຫຍ່ຫລວງ ທີ່ທັງສອງໄປເຮົ້າປ່ານຳກັນ ທັງນີ້ເພາະໄດ້ຕົກລົງໃຈໄວ້ແລ້ວວ່າຈະຍົກນາງອົ້ວໃຫ້ເປັນໃພ້ເມືອງຊຽງຂອນ. ຕໍ່ມາເພິ່ນກໍຕູ່ຫາແມ່ຂຸນລູວ່າ ສົມຣູ້ເປັນໃຈກັບລູກຊາຍ ເພື່ອມ້າງເພພິທີແຕ່ງດອງຂອງ ນາງອົ້ວກັບຂຸນເທືອງ. ເພິ່ນໂມໂຫຈົນຕົວສັ່ນ ແລະ ແຜດສຽງດັ່ງວ່າ :

" ເປັນຫຍັງເຈົ້າຈຶ່ງປ່ອຍໃຫ້ລູກຊາຍ ລັກລອບນອນນຳອີນາງອີ້ວ, ເຈົ້າກໍຮູ້ຢູ່ແລ້ວວ່າ ຂຸນເຫືອງຊິມາແຕ່ງເອົາ, ອັນນີ້ມັນແມ່ນເຈດຕະນາທຳລາຍກັນ ເບິ່ງໜ້າກັນບໍ່ໄດ້ອີກແລ້ວ !"

" ຂ້ອຍບໍ່ຮູ້ເລື່ອງດີໆ ເຈົ້າບໍ່ຕ້ອງມາແຜດສຽງໃສ່, ຖ້າລູກຂ້ອຍຜິດແທ້ ເປັນຫຍັງບໍ່ມາເວົ້າມາລົມນຳກັນດີໆ, ໃຫ້ເສຍຄຳ ເສຍເບ້ຍ ເສຍໝູເທົ່າໃດ ຂ້ອຍກໍຊິແຕ່ງແປງຕາມຮີດຕາມຄອງ ເຈົ້າບໍ່ຕ້ອງມາດ່າ!" ແມ່ຂຸນລູຮ້າຍຕອບ.

" ຂ້ອຍບໍ່ຕ້ອງການສິ່ງຂອງໃດໆຂອງເຈົ້າ ນັບແຕ່ນີ້ໄປຕັດຂາດກັນທຸກຢ່າງ "

ແລ້ວສາຍສຳພັນຂອງຄອບຄົວທັງສອງ ກໍຂາດສະບັ້ນລົງເຖິງຂັ້ນຢູ່ຮ່ວມບ້ານ ຮ່ວມເມືອງກັນບໍ່ໄດ້.

ແມ່ຂຸນລູຕັດສິນໃຈພາລູກ ແລະ ວົງສາຄະນາຍາດໜີໄປຢູ່ເມືອງຊອງ. ມັນເປັນເຫດການປ່ຽນແປງອັນໃຫຍ່ຫລວງໃນຊີວິດຂອງຄູ່ບ່າວສາວ ທີ່ກະທົບກະເທືອນໃຈຢ່າງສຸດພັນລະນາ, ຄືດັ່ງວ່າໂລກໄດ້ດັບວູບລົງສຳລັບທັງສອງ.



ວັນເວລາແຫ່ງ ຄວາມສຸກຫວານຊື່ນ ກາຍເປັນເລື່ອງ
ອະດີດໄປ.

ກ່ອນອອກເດີນທາງ ຂຸນລູໄປສັ່ງລານາງອົ້ວ ທັງສອງ
ເວົ້າລົມກັນສຽງສະອື້ນ ນໍ້າຕາໄຫລອາບແກ້ມ.

"ເມື່ອສອງເຮົາໄກກັນແລ້ວ ໃຫ້ຫລຽວເບິ່ງເດືອນດາວ
ແສງຕາເຮົາຊິຈອບກັນ ຢູ່ເທິງພຸ່ມ" ຂຸນລູເວົ້າອອຍ ໃຫ້ນາງອົ້ວ
ສະບາຍໃຈ.

"ແຕ່ນ້ອງກໍແຮ່ງທໍລະມານຈິດໃຈ ເພາະຫລຽວເບິ່ງຟ້າແລ້ວ ແຮ່ງຮູ້ສຶກປ່ຽວພອຍ ເພາະບໍ່ມີອ້າຍຢູ່ໃກ້."

"ກໍຍັງດີກວ່າບໍ່ຄິດຮອດຫາກັນ ຂໍຢ່າລືມອ້າຍເດີ."

"ນ້ອງບໍ່ເຫັນໃຜເລີຍ ທີ່ຈະມາຊ່ອຍແກ້ໃຫ້ເຊົາທຸກໃຈໄດ້, ຄິດຫາແຕ່ອ້າຍຜູ້ ດຽວນີ້ແຫລະ ນ້ອງລືມອ້າຍບໍ່ໄດ້ຕະຫລອດຊາດນີ້." ນາງອົ້ວກ່າວແລ້ວ ກໍສະອຶກສະ ອື້ນ.

ແລ້ວຂຸນລູກໍຂີ່ມ້າລາຈາກໄປ. ຕໍ່ແຕ່ນີ້ ທັງສອງຈະບໍ່ໄດ້ເຫັນໜ້າກັນອີກ, ຕາສອງຄູ່ນີ້ຈະບໍ່ໄດ້ເຈີກັນ ເປັນເວລາດົນອາດດົນເປັນເດືອນ ເປັນປີ ຫລື ຕະຫລອດກາລະນານ.

ທີ່ເມືອງຊອງ ຂຸນລູມີທຸກສິ່ງທຸກຢ່າງ ເພື່ອໃຫ້ຊີວິດດຳເນີນໄປຢ່າງສະດວກສະບາຍ ແລະ ມີຄວາມສຸກ ແຕ່ຫົວໃຈຂອງທ້າວເຕັມໄປດ້ວຍຄວາມຫງ່ອມເຫງົາເສົ້າໂສກ ເພາະທຸກວັນເວລາມີແຕ່ຄິດລະນຶງຫານາງອົ້ວ, ຍາມນັ່ງ ຍາມນອນຫົວໃຈໄດ້ແຕ່ອາວອນຫາຍິງຜູ້ເປັນດວງໃຈ ຜູ້ເປັນທຸກສິ່ງທຸກຢ່າງຂອງຕົນ. ຍາມກາງຄືນ ທ້າວແຫງນເບິ່ງເທິງຟ້າ ເບິ່ງດວງຈັນທີ່ລອຍເດັ່ນແລ້ວກໍເຫັນໃບໜ້ານາງອົ້ວ



ປາກົດຢູ່ທີ່ຟາກຟ້າສຸດແສນໄກນັ້ນ ແຕ່ຮູບພາບດັ່ງກ່າວ ບໍ່ເຮັດໃຫ້ທ້າວມີຄວາມສຸກເລີຍ ແຕ່ຍິ່ງເຮັດໃຫ້ຄິດຮອດ ຫ່ວງຫາ ແລ້ວກໍຄວ້າເອົາແຕ່ລົມໆແລ້ງໆ. ເມື່ອຢູ່ໄກກັນ ຄວາມຮັກ ກໍແທນທີ່ດ້ວຍຄວາມອາໄລອາວອນປານຫົວໃຈ ຈະຂາດ ມັນຄືວິນຍານ ຂອງທັງສອງໄດ້ອອກຈາກຮ່າງ ເພື່ອ ໄປພົບກັນທີ່ນະພາກາດ ບ່ອນມີແສງຍິບຍັບຂອງ ດວງດາວ

ເດຍລະດາດຟ້າ, ຣ່າງກາຍຈຶ່ງຊຶມເສົ້າບໍ່ເຫລືອຣ່ອງຣອຍ ເບີກບານມ່ວນຊື່ນ ປຽບດັ່ງຄົນທີ່ຕາຍທັງເປັນ ເຫລືອພຽງ ຣ່າງຄີງທີ່ເຄື່ອນໄຫວຢ່າງໄຮ້ຈຸດ ໝາຍ.

ຝ່າຍນາງອົ້ວ ກໍຢູ່ໃນສະພາບດັ່ງດຽວກັບຂຸນລູ ຫລື ອາດຈະໜັກໜ່ວງກວ່າ ຫົວໃຈດວງນ້ອຍໆສະທ້ານ ສະເທືອນ, ນາງທຸກໃຈຄືນົກນ້ອຍທ່າມກາງສາຍຝົນ, ດັ່ງນີ້ ເພື່ອໃຫ້ຄວາມອຸກເອົ້າເສົ້າໝອງທຸເລົາເບົາບາງລົງ ນາງ ຈຶ່ງຂຽນສານໄປຫາຂຸນລູ ລະບາຍຄວາມຮູ້ສຶກໃນໃຈອອກມາ. ນາງບອກວ່າ: ເມື່ອບໍ່ມີອ້າຍ ກໍບໍ່ມີໃຜຊ່ອຍແກ້ ຄວາມອຸກອັ່ງ ຫຍຸ້ງຍາກໃຈ ທີ່ປຽບຄືໄຟລາມໄຫມ້ໃນທ້ອງມື້ລ້ານເທື່ອ.

ນາງສາລະພາບວ່າ:

ພາຍພະອວນນ້ອງ ຂຸນເທືອງກໍຕັດຂາດໄປແລ້ວ
ອົ້ວບໍ່ຄິດອ່າວເອື້ອ ດອມແທ້ທໍ່ໃຍ
ອັນແຕ່ໃນຊາດນີ້ ຊິຕັ້ງຕໍ່ຂຸນລູ ຜີແລ້ວ
ຂໍໃຫ້ປານີຣຽມ ຢ່າລະໄລຄາວນ້ອຍ.

ຂຸນລູໄດ້ຮັບສານ ກໍປານໄດ້ຫນ່ອຍແກ້ວດວງປະເສີດ, ຄວາມເສົ້າຫມອງສູນຫາຍໄປ ເຖິງຈະຊົ່ວລະຍະກໍຕາມ. ທ້າວຕອບສານນາງອົ້ວ ໂດຍບອກບໍ່ໃຫ້ອີຕົກກັງວົນນຳວ່າ ທ້າວຈະກາຍເປັນອື່ນ :

ອັນວ່າບຸນເຮົາສ້າງ ກິນທານແຕ່ຊາດກ່ອນ ຄາວນັ້ນ
ເປັນແຕ່ບຸນກ່ອນກໍ້ ເຮົາສ້າງສືບມາ
ຢ່າໄດ້ອີຕົກດ້ອຍ ພາຍພະອອນຊິຄຶດຫນ່າຍ
ພົບເມື່ອຂວັນແຈ່ມເຈົ້າ ມາຝັ້ນບໍ່ມາຍ.

ຂຸນລູບອກໃນຕອນທ້າຍວ່າ: ຖ້າອົ້ວປະລະໄລຂຸນເຫືອງ ແລ້ວ ອ້າຍກໍຈະຕາວ ຄືນໄປຫາຢູ່ເມືອງກາຍຢ່າງແນ່ນອນ ໃນບໍ່ດົນ.

ຂຸນລູສົ່ງສານໄປກັບສາວໃຊ້ສອງຄົນ ຜູ້ທີ່ນຳເອົາສານ ຂອງນາງອົ້ວມາແຕ່ ເມືອງກາຍ ແລະ ການເດີນທາງ

ຂອງສາວໃຊ້ກໍເປັນຄວາມລັບ ຮູ້ສະເພາະແຕ່ນາງອົ້ວເທົ່ານັ້ນ. ສາວໃຊ້ເດີນທາງຕ່າວຄືນຢ່າງຮີບດ່ວນ.

ນາງອົ້ວອ່ານສານຂອງຂຸນລູແລ້ວ ກໍສະຫລົບໄປ ເພາະຄວາມຕື່ນເຕັ້ນດີໃຈ ປະສົມກັບຄວາມຄິດຮອດອາໄລ ຫາສຸດທີ່ຈະພັນລະນາ, ສາວໃຊ້ຕ້ອງຟ້າວໂຊມເອົານາງ ແລ້ວເອົານໍ້າພົ່ນໃສ່ ຄາວຫນຶ່ງນາງກໍຟື້ນຕື່ນຄືນມາ ແລະ ເຣີ່ມຮຽກຫາຂຸນລູ ເຫມືອນຄົນເປັນບ້າປ່ວງ.

"ຂຸນລູພວມມາ ຂໍໃຫ້ເຈົ້ານາງເບົາໃຈໄວ້." ສາວໃຊ້ພະຍາຍາມເວົ້າອິ່ນອອຍ.

"ປານໃດຊິມາຮອດປານໃດ ?" ນາງອົ້ວຖາມແລ້ວຖາມອີກ.

"ມື້ອື່ນເຊົ້າ ຂຸນລູຊິມາຮອດ ໃຫ້ເຈົ້ານາງນອນຫລັບເອົາແຮງໄວ້ ເພື່ອຈະໄດ້ກຽມຕົວໄປຕ້ອນຮັບ." ສາວໃຊ້ເວົ້າເພື່ອໃຫ້ນາງສະຫງົບສະຕິອາລົມ.

ນາງອົ້ວ ຫລັບຕາມິດວງຽບໄປ ແຕ່ຫົວໃຈຮໍ່າຄະນຶງຫາຜູ້ເປັນຊູ້ຢູ່ທຸກລົມຫາຍໃຈເຂົ້າອອກ :

ຕາຍອົກຂ້ອຍ ຫົວໃຈອື່ວຄ່ຽມ ຂຸນເຮີຍ
ສຸດທີ່ແມ່ຂ້ອຍຮ້າຍ ເຫລືອດ້ານແທ່ງຄົນ
ສັງບໍ່ຄິດເມື່ອຄາວກ່ອນກີ້ ຕອນແມ່ເປັນສາວ ນັ້ນນາ
ຊາດທີ່ຫົວໃຈຄົນ ກໍດັ່ງດຽວສະເຫມີແທ້
ບ່ອນບໍ່ມັກສັງຊິມາກຸມໃຫ້ ຂຸນເທືອງຂ້າປ່າສັງເດ
ແມ່ຫາກມັກແມ່ຫາກເວົ້າ ຕາມທ້ອນແມ່ຊິເອົາ
ຂ້ອຍນີ້ ຄັນບໍ່ໄດ້ຍອດແກ້ວ ເຈົ້າຂະຫນ່ອມ ຂຸນລູ
ແມ່ນວ່າຕາຍເປັນຜີ ບໍ່ສວ່າງລຳລະນຶງຫ້າວ

ເຊົ້າມື້ຕໍ່ມາ ນາງອົ້ວກັບສາວໃຊ້ ພາກັນອອກໄປຍັງສວນມອນ ໂດຍບອກແມ່ວ່າ ເພື່ອເກັບໃບມອນມາລ້ຽງມ້ອນ ສ່ວນທີ່ເກັບມາແຕ່ກ່ອນນັ້ນ ຫມົດແລ້ວແຕ່ວານນີ້. ນາງມີເຈດຕະນາໄປພົບກັບຂຸນລູທີ່ຈະມາຫາຢູ່ແຫ່ງນັ້ນ ຕາມການບອກເລົ່າຂອງສາວໃຊ້. ນາງເອີກແພນ ຜູ້ເປັນເອື້ອຍກໍໄດ້ໄປນຳ ເພື່ອສົ້ງຊອມເບິ່ງນ້ອງສາວ.



ການໄດ້ມາຍ່າງຫລິ້ນຢູ່ສວນມອນທ່າມກາງທຳມະຊາດ ພາໃຫ້ນາງອົ້ວສົດຊື່ນຂຶ້ນ ຫົວໃຈປ່ຽມລົ້ນໄປດ້ວຍຄວາມສຸກ ແຕ່ນາງກໍພະຍາຍາມເຊື່ອງອຳຄວາມຮູ້ສຶກໄວ້ ເພາະບໍ່ຢາກໃຫ້ເອິກແພນ ຮູ້ຈັກເຈດຕະນາທີ່ແທ້ຈິງຂອງຕົນ. ນາງເກັບໃບມອນ ທັງຍ່າງທ່ຽວເລາະ ໄປຍັງບ່ອນຫ່າງຜູ້ຄົນ ສາຍຕາ

ສອດສ່ອງຫາຂຸນລູ ທັງຕ້ອງຫລຽວລັອກຫລຽວແລັກ ເບິ່ງຜູ້ທີ່ຈະຕິດຕາມມາສັງເກດເບິ່ງ. ນາງຍ່າງໄປເລື້ອຍໆ ທ່າມກາງສີຂຽວອຸ່ມຫຸ່ມຂອງໃບນອນ ທັງຫົວໃຈເຕັ້ນຕູມຕາມ, ແລ້ວໃນທີ່ສຸດຫົວໃຈ ຂອງນາງກໍເກືອບຢຸດເຕັ້ນເຢັນສັນຫລັງວາບເມື່ອມີມືຄວາມາທາງຫລັງ ພ້ອມດ້ວຍສຽງເວົ້າຂຶ້ນຄ່ອຍໆ : "ອົ້ວ ອ້າຍຢູ່ຫນີ້ ."

ຂຸນລູ ກັບນາງອົ້ວໄດ້ພົບພໍ້ກັນອີກ, ມື້ນີ້ ເວລານີ້ ໂລກເປັນຂອງພວກເຂົາທັງສອງ, ຄວາມຫວານຊື່ນໃນວັນແຫ່ງອະດີດໄດ້ກັບຄືນມາ, ນ້ຳຕາແຫ່ງຄວາມ ປິຕິຍິນດີໄຫລຫລັ່ງ ແຕ່ຊ່າງມັນເທາະ ອໍໃຫ້ມັນຫລັ່ງອອກມາ ໃນເມື່ອທັງສອງຍິນດີດອມກັນ. ທັງສອງຮູ້ສຶກວ່າຕົກຢູ່ໃນດິນແດນແຫ່ງຄວາມຝັນຕົວເບົາຄືຝ້າ,ເປັນອິດສະຫລະດັ່ງນົກກາງອາກາດ ທີ່ສຳຜັດກ້ອນເມກໄດ້ ແລະ ຢາກໃຫ້ໂລກຢຸດຍິ່ນຫມູນ ເພື່ອຈະໄດ້ຢູ່ນຳກັນດົນໆ. ແຕ່ໂດຍແທ້ຈິງ ໂລກນີ້ບໍ່ແມ່ນສຳລັບພວກເຂົາທັງສອງ ຍັງມີເອີກແພນອີກຄົນຫນຶ່ງ ທີ່ເຝົ້າຕິດຕາມເບິ່ງຢູ່.

---

ເວລາທີ່ໄດ້ຢູ່ໃກ້ກັນນັ້ນ ຜ່ານໄປໄວເຫລືອເກີນ. ແລ້ວຂຸນລູກໍຂີ່ມ້າຄ່ອນກັບຄືນເມືອງຊອງ. ນາງອົ້ວ, ເອີກແຜນ ແລະ ສາວໃຊ້ພາກັນຕ່າວຄືນເມືອໂຮງ. ວັນທີ່ເຕັມໄປດ້ວຍຄວາມຊົງຈໍາອັນຫອມຫວນຂອງນາງອົ້ວ ກໍສິ້ນສຸດລົງ.

ກັບມາຮອດໂຮງ ນາງອົ້ວຕ້ອງພົບກັບບັນຫາຫນັກອົກຫນັກໃຈ ເພາະເອີກແຜນ ໄປສັບສໍ່ແມ່ເລື່ອງທີ່ນາງພົບກັບຂຸນລູຢູ່ທີ່ສວນມອນ. ແມ່ດ່າວ່ານາງອົ້ວຮຸນແຮງກວ່າ ເມື່ອຄັ້ງກ່ອນໆມາ: "ແມ່ສອນຍາມໃດກໍບໍ່ຈື່ ລູກກໍຮູ້ແລ້ວຕວ່າ ວ່າແມ່ກັບ ແມ່ສ່ຽວຜິດກັນຈົນເຂົ້າຫນີໄປຢູ່ເມືອງຊອງພຸ້ນ, ຕັດຂາດກັນຫມົດທຸກສິ່ງທຸກຢ່າງ ແລ້ວເປັນຫຍັງລູກຈຶ່ງໄປກ່ຽວຂ້ອງກັບຂຸນລູຢູ່ອີກ. ລູກບໍ່ມີຫົວໃຈຫວະ ! ເປັນຫຍັງ ຈຶ່ງບໍ່ຮັກສາກຽດແມ່ໄວ້, ແມ່ອົດສາລ້ຽງ ອົດສາແພງ ຫມົດແສນໂຕໄກ່ ກວ່າຊີໃຫຍ່ຫມົດແສນໂຕປາ ແມ່ຮັກລູກ ປານແກ້ວແຫວນແພງເຈົ້າປານແກ່ນຕາ ແຕ່ເປັນຫຍັງລູກ ບໍ່ຟັງຄໍາບອກສອນຂອງແມ່ຈັກຄໍາ, ຊິບໍ່ໃຫ້ແມ່ເຫລືອໃຈ ໄດ້ຫວະ!"



ນາງອົ້ວພະຍາຍາມບອກໃຫ້ແມ່ຮູ້ວ່າ ມີຫລາຍຄົນຮູ້ເຫັນ ນຳກັນ ທີ່ຂຸນລູເຂົ້າມາໃນສວນ ແລະ ທັງສອງບໍ່ໄດ້ເຮັດ ແນວບໍ່ດີ ແຕ່ແມ່ກໍບໍ່ເຊື່ອ. ນາງຈຶ່ງເຂົ້າໄປໃນຫ້ອງ ອັດປະຕູ ແລ້ວກໍຮ້ອງໄຫ້ຮ່ຳໄຮ ນຳຄວາມອາພັບອັບໂຊກຂອງຊີວິດຮັກ.

ອັນວ່າ ຂຸນລູທ້າວ ບາຄານເຈົ້າຂະຫນ່ອມ ຣຽມເອີຍ
ຍັງຈັກຄຶດຮອດນ້ອງ ພາຍພີ້ສິ່ງໃດ ນີ້ເດ
ບັດນີ້ ດິນຂາດຂັ້ນ ເຂີນລາດໄກກັນ ແລນໍ

ເປັນດັ່ງແປວເດືອນດາວ   ແຜ່ນດິນໄກຟ້າ
ອັນວ່າສາຍຄໍອ້າຍ   ຂຸນລູທີບພະເນດ  ຣຣມເອີຍ
ຂໍໃຫ້ຜີມາຊ່ອຍແກ້   ຄວາມຫຍຸ້ງສວ່າງໃຈ ແດ່ທ້ອນ

ສ່ວນຂຸນລູ ກັບເມືອເມືອງຊອງແລ້ວ ກໍຢູ່ຢ່າງງຽບຂຶມ, ໂລກນີ້ບໍ່ເປັນຕາໜ້າຢູ່,ຫລຽວໄປທາງໃດ ເຫັນແຕ່ສິ່ງຂວາງກັ້ນຕັນທາງ, ມັນຕັນຄວາມຫວັງ ຕັນຄວາມຮັກຕັນນາງອົ້ວໄວ້ໃຫ້ແຍກໄປຕ່າງຫາກ ຊຶ່ງເປັນເລື່ອງທີ່ທ້າວຍອມບໍ່ໄດ້. ຂຸນລູບໍ່ກິນເຂົ້າກິນນ້ຳ ອາການຫລ່າເຫລືອງຄືດັ່ງຄົນເປັນໄຂ້ທີ່ບໍ່ມີຢາຊະນິດໃດມາແກ້ໄດ້.

ບາງທີການເບິ່ງແມນຫລືດູມໍ ເບິ່ງໂຊກຊາຕາອາດຊ່ອຍໃຫ້ຮູ້ຈັກສາເຫດອາການຂອງຂຸນລູໄດ້. ດັ່ງນີ້ ນາງຈັນຜູ້ເປັນກວານຈ້ຳ ຈຶ່ງເຮັດພິທີຮຽກແຖນຈາກເມືອງຟ້າ ລົງມາເບິ່ງແມນໃຫ້ບ່າວສາວທັງຫລາຍ. ພິທີຈັດຂຶ້ນຢູ່ບອມພຽງອັນເປັນທົ່ງກວ້າງໃຫຍ່ ບ່ອນເຄິ່ງທາງລະຫວ່າງເມືອງຊອງກັບເມືອງກາຍ. ບ່າວສາວທັງແມ່ຮ້າງ ແມ່ໝ້າຍ ຈາກ

ສອງເມືອງນີ້ ພາກັນຫລັ່ງໄຫລໄປຢ່າງຄັບຄັ່ງອ້ງອໍ. ຂຸນລູໄປກັບຂຸນຄວນຜູ້ເປັນນ້ອງຊາຍ, ສ່ວນນາງອົ້ວ ໄປກັບເອິກແພນ. ແຕ່ລະຄົນເອົາອາຫານການກິນ, ເຫລົ້າຢາໄປພ້ອມຢ່າງພຽງພໍ, ບາງຄົນກໍເອົາປີ່, ຂຸ່ຍ ແລະ ແຄນໄປນຳເພື່ອ ເສບວັນ ໃຫ້ມ່ວນຊື່ນເບີກບານ. ພວກສາວໆພາກັນທັດດອກໄມ້ຫລາຍສີງາມຕາ ສະໃບຄຳ ຄາດຄຽນເອິກ ແລະຍ່າງລຽນກັນມຸ່ງສູ່ຜາມໃຫຍ່ທີ່ປຸກໄວ້ສຳລັບພິທີສຳຄັນນີ້. ເມື່ອໄດ້ລືກງາມຍາມດີ ກວານຈ້ຳກໍຮຽກເຊີນແຖນລົງມາວ່າ : "ເຊີນລົງເຢີ ເກົ້າຮ້ອຍຫມູ່ ປະນົມແຂນ ແຖນເຮີຍ ສິບປີຕູຈິ່ງເຕົ້າ ເກົ້າຟ້າຕູຈິ່ງຫາແຖນ ມາເຢີທັດດອກໄມ້ແກ້ວນຳຫມູ່ສາວຮາມ ມາປູກມິ່ງໃຫ້ເປັນແດ່ນ ມາຖົມແນນຢ່າໃຫ້ຊາຍແຖນເຮີຍ..."

ຕໍ່ມາຍິງທີ່ເປັນນາງໃຍກໍຖືກຜີສູນ ຕົນຕົວສັ່ນ ຕາມືດມົວ ແລະ ມີອາການລືມຄີງ ເພາະແຖນເຂົ້າສິງໃນຕົວ, ແລ້ວນາງຈັນ ກວານຈ້ຳກໍລົມນຳແຖນວ່າ: "ຂ້ອຍຢູ່ພີ້ເມືອງລຸ່ມຄອງຫາເຈົ້ານາແຖນເຮີຍ ບ່າວພີ່ນ້ອງທັງຫມູ່ ສາວຮາມ ເອົາ

ກົມານຳຣຮຸມຊູ່ຄົນຈິງແທ້ ແຖນເຮີຍ ທຸກບໍ່ມີ ຄູ່ຊ້ອນ ທຣຸມສອງ ກໍລຳບາກ ມີແຕ່ສູດເສື່ອປ້ອງ ໜອນຂ້າງເຜື່ອນຮຣຸມ..."

ແຖນກ່າວໂດຍຜ່ານນາງໃຍວ່າ ແຖນເອງເນົາຢູ່ເທິງຟ້າ ກໍບໍ່ມີຄູ່ຊ້ອນ ນອນຮຽງດັ່ງດຽວກັນ. ທຸກຄົນພາຍໃນຜາມ ມິດງຽບ ເພື່ອຟັງແຖນເວົ້າກັບນາງຈັນ ດ້ວຍໃຈຈົດໃຈຈໍ່. ຕໍ່ມາ ແຖນຖາມຂຸນລູ ກັບຂຸນຄວນວ່າ : " ອັນວ່າສອງອ່ອນທ້າວ ຢູ່ດ້າວ ເມືອງລຸ່ມ ຍັງສະຖຽນແດ່ລື ຮູ້ວ່າມີໂລຄາຖືກຕົນ ຕົວທ້າວນັ້ນລື."

ຂຸນລູຍໍມືນົບແລ້ວຕອບວ່າ: "ທຸກແຕ່ໃຕ້ລຸ່ມຟ້າ ທໍ່ມີຂ້ອຍ ຜູ້ດຽວ ຈຶ່ງໄດ້ເຊີນແຖນຟ້າລົງມາປ້ອງມິ່ງ ແນນຂ້ອຍຂາດ ແຖນເຈົ້າຊ່ວຍຖົມແດ່ທ້ອນ ແຖນເຮີຍ ທີ່ມັກມາບໍ່ໄດ້ຢູ່ຊ້ອນ ຕັ້ງປອດໃນຂະໜອງ ຈຶ່ງໄດ້ເຊີນແຖນລົງເບິ່ງແນນ ເຜືອຂ້າ..."

ແລ້ວແຖນກໍອ່າຍມາຖາມ ນາງອົ້ວກັບເອີກແຜນ ທີ່ມາແຕ່ເມືອງກາຍວ່າ : "ສາຍຄຳກູຄ່ອຍມາເຖິງຜີດີລື ເຈົ້າຢູ່ ດ້າວເມືອງລຸ່ມ ແຖນຢູ່ຟ້າຕຸ້ມອ່ອນສອງ ນາງອຸ່ນເຮີຍ ..."

ນາງອ້ອກ່າວຕໍ່ແຖນວ່າ : " ອັນວ່າຄວາມທຸກຂ້າ ເຫລືອຫລາຍກວ່າເພື່ອນເສຍແລ້ວ ບໍ່ກວ່າແຖນຢູ່ຟ້າ ຄຸນຂ້າຢ່າໄລ..."

ມີບ່າວແລະສາວອີກຫລາຍໆຄົນ ຈົ່ມທຸກຈົ່ມຍາກ ສູ່ແຖນຟັງ ຈົນເວລາຜ່ານໄປ ແລ້ວຈຶ່ງມີພິທີຟາຍເຫລົ້າ ແລະ ຢາຍເຫລົ້າສູ່ກັນກິນຢ່າງຟົດຟື້ນີ່ບັນ, ບ່າວສາວເວົ້າຢອກໄຍ ກັນ.ບາງພ່ອງຫົວບາງພ່ອງຂັບລໍາສຽງຂຶ້ນສຽງລົງ, ສຽງຂຸ່ຍ ສຽງແຄນ ດັ່ງປົນເປກັນ ປານສຽງຂຽດອໍຍາມຝົນຕົກໃຫມ່.

ພໍໄດ້ເວລາເຫມາະສົມ ກໍມີການສ່ຽງກອງ ໂດຍແກວ່ງ ງ ຄ້ອນໃສ່ກອງ, ຖ້າໃຜ ແກວ່ງຄ້ອນຖືກເຄິ່ງກາງຫນ້າກອງ ຖືວ່າຊາຕາດີ. ຂຸນຄວນແກວ່ງຄ້ອນໄປຖືກ ເຄິ່ງກາງພໍດີ, ສຽງຮ້ອງໂຮສາທຸການດັງຂຶ້ນຢ່າງແຮງ, ແຖນວ່າ: "ເຈົ້າຈັກ ໄດ້ ຜ່ານດ້າວ ແທນທີ່ເປັນພະຍາ ຝູງລຸງອາວຢູ່ດີດອມເຈົ້າ..."

ເອີກແພນ ເປັນຜູ້ແກວ່ງຖັດມາ,ຄ້ອນໄປຖືກບ່ອນເຫມາະ ພໍດີ, ແຖນວ່າ : "ນາງຈັກໄດ້ຜ່ານພື້ນ ແທນເຜົ່າວົງສາ ເງີນຄໍາມີອາດຈັກກີກອງລົ້ນ..."

ສອງຄົນ ທີ່ແກວ່ງຕໍ່ມາ ແມ່ນຂຸນລູກັບນາງອົ້ວ. ແຕ່ທັງສອງແກວ່ງລ້ອນໄປຖືກແຄມກອງດັ່ງດຽວກັນ. ແຖນວ່າ: "ເຈົ້າຈັກໄດ້ພາກຢ້າວທັງເຜົ່າວົງສາ ທັງເສນາໄພໄທວາງໄວ້."

ບ່າວສາວທຸກຄົນພາກັນແກວ່ງລ້ອນໃສ່ໜ້າກອງ ຈົນຄົບ, ມີສຽງຮ້ອງໂຮດັງບໍ່ມີຍາມເຊົາ, ຍາມໃດມີຜູ້ແກວ່ງຖືກເຄິ່ງກາງ ກໍມີສຽງຮ້ອງແຮງໆ ດັງສະນັ່ນຂື້ນ.

ຕໍ່ຈາກນັ້ນ ແຖນພາສ່ຽງເບິ່ງຢ່າງອື່ນ ເຊັ່ນ ໃບໄມ້, ໝາກໄມ້,ຂຸນລູກັບນາງອົ້ວ ຖືກໃບບໍ່ດີ ແລະ ໝາກໄມ້ກໍຖືກໜ່ອຍເປັນແມງ, ສຸດທ້າຍເລີຍສ່ຽງເບິ່ງດອກໄມ້. ແຖນໃຫ້ທຸກຄົນເຂົ້າປ່າຫາດອກໄມ້ມາໃຫ້ເບິ່ງ. ຂຸນຄອນຫາໄດ້ດອກຈຳປາ, ເອີກແພນໄດ້ດອກຊ້ອນ, ນາງຈັນໄດ້ດອກແກ້ວ, ແຖນເບິ່ງດວງດອກໄມ້ແລ້ວ ກໍວ່າ ທຸກຄົນ ດີແທ້ທໍ່ກັນບໍ່ຮ້າຍແຕ່ຢ່າງໃດ. ສ່ວນຂຸນລູກັບນາງອົ້ວ ຊອກຫາ ດອກໄມ້ຈົນເມື່ອຍ, ໃນທີ່ສຸດ ຂຸນລູກໍໄດ້ດອກຂຸນພຸມ, ນາງອົ້ວ ໄດ້ດອກແຄຝອຍ ມາຖວາຍ, ແຖນກ່າວວ່າ: "ອັນວ່າຂຸນລູທ້າວທັງນາງອົ້ວລ່ຽມ ເປັນດັ່ງນົກຖືກແຮ້ວ ພານຊ້ຳ ຍໍ່າຍີ...

---



ແຖນຈັກຍົກກໍບໍ່ແກວ່ນ ແຖນຈັກຍໍກໍບໍ່ໄດ້ ຊັກໃຊ່ຕໍ່ ຄໍາຕາຍ ຂຸນເຮີຍ... ໃຜບໍ່ອາດຈັກຫ້າມໄດ້ ເວນທາກມາເຖິງ ເປັນແຕ່ກໍາປາງຫລັງ ຈ່ອງມາວຽນຄອບ ຂຸນເຮີຍ..."

ແລ້ວແຖນກໍລາກັບຄືນເມືອເມືອງຟ້າ ທັງບອກວ່າ ອີກຫລາຍປີແຖນຈັກເຕົ້າ ຟ້າບໍ່ເຖົ້າຊິຕ່າວຄືນມາ. ນາງຈັນ ກວານຈໍ້າ ອວານຫມູ່ທຸກຄົນອອກຈາກບວນພຽງ ກັບຄືນ

ສູ່ຕົວເມືອງ. ຂຸນລູ ກັບນາງອົ້ວ ພາກັນໄປຮອດຕົ້ນໄມ້ທີ່ມີງ່າ ໂຄ້ງກ່ອງລົງ ແລ້ວກໍອຳລາກັນ ທ້າວກຳແຂນນາງ ແລ້ວສັ່ງ: " ນ້ອງຊິພັດພາກອ້າຍ ໄປແລ້ວຫມັ່ນລະນຶງແດ່ເນີ ອັນວ່າ ຄວາມທຸກອ້າຍ ຈົບແຫ່ງໃນມະນຸດຈິງແລ້ວ ຂອນຫາກຫມອງ ໃນຫວງ ດັ່ງຊິກາຍເປັນບ້າ ພີ່ບໍ່ໄດ້ອ່ອນອົ້ວ ເປັນມິ່ງເມຍຂວັນ ແຫນງສູ່ມໍລະນາຕາຍ ແຄ່ດິນໃຫ້ມັນແລ້ວ."

ສ່ວນນາງອົ້ວ ກໍກ່າວວ່າ : " ໃຈນ້ອງເຫມືອນສິ່ງເຈົ້າ ສອງເບື້ອງດັ່ງກັນ ອົ້ວນີ້ຄັນບໍ່ໄດ້ຍອດຟ້າ ເປັນມິ່ງຜົວຂວັນ ແຫນງສວ່າງແຂວນຄໍຕາຍ ທີ່ງ່າຈວງລຳດົ້ວ."

ນາງອົ້ວບອກຂຸນລູອີກວ່າ ຫາກຈະໄປຫານັ້ນ ໃຫ້ປອມຕົວ ເປັນໄພ່ຊາວພູດອຍ ເພື່ອຈະບໍ່ມີຜູ້ສັງເກດຮູ້.

ແລ້ວທັງສອງກໍແຍກຈາກກັນ ແລະ ມຸ່ງຫນ້າໄປເທິງ ເສັ້ນທາງທີ່ກົງກັນຂ້າມ ດ້ວຍຄວາມຮູ້ສຶກຝືນໃຈ ຄືດັ່ງວ່າ ແຕ່ລະຄົນກ້າວໄປສູ່ປ່າຊ້າ ທັງນີ້ ເພາະຮູ້ຢູ່ວ່າ ປາຍທາງນັ້ນ ມີແຕ່ຄວາມຫວ່ວມເຫວົ່າຄອງຖ້າຢູ່. ບໍ່ພຽງແຕ່ທໍ່ນັ້ນ ນາງອົ້ວ ຍັງຈະ ຕ້ອງຖືກແມ່ຮ້າຍດ່າຊ້ຳແລ້ວຊ້ຳອີກ.

ກັບເຖິງໂຮງ ນາງອົ້ວຂັງຕົນເອງຢູ່ໃນຫ້ອງ ຫລັງຈາກທີ່ຖືກແມ່ຂູ່ເຂັນ ຈົນບໍ່ອາດຫລຽວເບິ່ງຫນ້າໃຜໄດ້ອີກ, ນາງຫລຽວເບິ່ງຟ້າ ຟ້າກໍເຫວົ່າ,ຫລຽວເບິ່ງດາວ ດາວກໍປ່ຽວພອຍຢູ່ສຸດຝາກຟ້າ, ໃບຫນ້າຂອງນາງຈຶ່ງບໍ່ມີຮ່ອງຮອຍຂອງຄວາມເບີກບານເລີຍ. ຫາກຊາດຫນ້າມີ... ຄວາມຄິດນີ້ ແວບເຂົ້າມາໃນຫ້ວງນຶກອີກ - ຄວາມຮັກຂອງ ນາງຄົງບໍ່ມີອຸປະສັກຄືດັ່ງໃນປັດຈຸບັນ. ຊາດຫນ້າຄືຊ່ອງທາງດຽວທີ່ຈະໄປ ເພື່ອໃຫ້ຫລຸດພົ້ນຈາກຄວາມທຸກທໍລະມານໃຈແລ້ວປະສົບກັບຄວາມສຸກສົມຫວັງກັບຊາຍທີ່ຕົນຮັກ.

ຂຸນລູ ກໍບໍ່ອາດມີຊີວິດທີ່ຫ່າງເຫີນຈາກນາງອົ້ວໄດ້. ທ້າວຮູ້ສຶກເຮຮົນກະວົນກະວາຍ ແລະ ຈົ່ມຢູ່ໃນໃຈວ່າ ບໍ່ຍຸດຕິທໍາເລີຍທີ່ການວິວາດກັນຂອງແມ່ທັງສອງຝ່າຍ ຈະຕ້ອງມາກີດຂວາງຄວາມຮັກຂອງຜູ້ເປັນລູກທັງສອງ. ຂຸນລູຕັດສິນໃຈຈະຄືນໄປເມືອງກາຍອີກຕາມຄວາມຮຽກຮ້ອງຂອງຫົວໃຈ.

ແລ້ວມື້ຫນຶ່ງ ຂຸນລູກໍນຸ່ງຜ້າຕ່ຽວ ເອົາຜ້າຄຽນຫົວ ຖືຫນ້າໄມ້ ພາຍຖົງປົ໊ຽດ ຍ່າງຄົນດຽວມຸ່ງຫນ້າສູ່ເມືອງກາຍ

ບ່ອນທີ່ມີຄວາມຫມາຍທຸກສິ່ງທຸກຢ່າງສຳລັບທ້າວ. ຕາມທາງທ້າວຍິງສັດປ່າ ເຊັ່ນ ກະຮອກກະແຕແລ້ວຫາບໄປ ທຳທ່າເປັນນາຍພານຫາຍິງສັດ. ເມື່ອຮອດເມືອງກາຍ ມີຜູ້ຄົນຖາມຊື້ ຖາມແລກ ທັງຈ່ອງຫນ້າຈ່ອງຫລັງ ຈົນຕ້ອງຢຸດຫລາຍເທື່ອ. ສຽງສໍ້ຖາມ ຫລື ຕໍ່ລາຄາດັງຂຶ້ນຢ່າງສັບສົນ.

" ກະຮອກສອງໂຕແລກເກືອທໍ່ຫນຶ່ງສາ "

" ຫ້າໂຕແລກແພຕ່ຽວນີ້ "

" ເຈັດແປດໂຕ ແລກເສື້ອ ເອົາບໍ່ ? "

ຂ່າວທີ່ມີຄົນຈາກພູດອຍເອົາສັດປ່າມາຂາຍ ດັງໄປຮອດນາງອົ້ວ. ບໍ່ດົນຕໍ່ມາ ສາວໃຊ້ກໍຖືກສົ່ງໄປນຳສັງເກດເບິ່ງ ແລະກັບຄືນມາບອກນາງອົ້ວວ່າ ແມ່ນຂຸນລູ ແທ້. ນາງອົ້ວບອກໃຫ້ສາວໃຊ້ພາຂຸນລູລັກລອບເຂົ້າໄປຫາ ຈົນເປັນຜົນສຳເລັດ. ທັງສອງໄດ້ພົບກັນສົມຄວາມປາຖະຫນາ ສົມຄວາມຄິດຮອດຄິດເຖິງ. ເມື່ອປະຕູຫ້ອງງັບເຂົ້າ ກໍມີແຕ່ທັງສອງເທົ່ານັ້ນທີ່ຢູ່ນຳກັນຕາມລຳພັງ.

---



ນາງອື້ອຈີ່ມທຸກອົກທຸກໃຈວ່າ :

" ນ້ອງມີຊີວິດຢູ່ດ້ວຍການຫລັ່ງນ້ຳຕາ, ທຸກມື້ທຸກຍາມຄິດເຫັນແຕ່ຫນ້າອ້າຍ, ກິນເຂົ້າຄຳໃດກໍແຄ້ນ ແຫນ້ນອັ່ງຢູ່ໃນທອງ."

" ອ້າຍກໍຄືກັນ ຢາກເຫັນຫນ້ານ້ອງຈຶ່ງເດີນດ່ຽວມາຫາ, ເຖິງຈະມີສິ່ງ ກີດຂວາງກໍຕາມ ອ້າຍກໍຈະຜ່ານ້າງ, ເຖິງຈະ

ເອົາຊີວິດເຂົ້າສ່ຽງ ອ້າຍກໍຈະຍອມ ເພື່ອບໍ່ ໃຫ້ພວກເຮົາຕ້ອງ ພັດພາກຈາກກັນ, ຖ້າຕ້ອງຕາຍພວກເຮົາກໍຈະຕາຍພ້ອມກັນ." ຂຸນລູອ່າ .

" ຈິດໃຈນ້ອງກໍດັ່ງດຽວກັບອ້າຍ ນ້ອງຮັກອ້າຍຄືດັ່ງ ເຂົ້າຢູ່ນາ ຄືດັ່ງປາຢູ່ນ້ຳ ນ້ອງຍອມສະຫລະທຸກຢ່າງ ເພື່ອໃຫ້ ສອງເຮົາໄດ້ຢູ່ໃກ້ກັນ. "

ທັງສອງຢູ່ນຳກັນຕະຫລອດຄືນ ແລະ ເຂົ້າໃຈຄວາມ ຫມາຍ ຂອງຄຳວ່າ ເສຍສະຫລະໃຫ້ກັນ ແລະ ກັນ ຢ່າງເລິກ ເຊິ່ງ. ມັນເປັນຄືນທີ່ທັງສອງໄດ້ເຊັດນ້ຳຕາທຸກຢາດ ໃຫ້ກັນ ແລະ ກັນ ເຫືອດໄປຈາກແກ້ມ,ຄືນທີ່ບໍ່ມີຄວາມເຫງົາ ມາ ລົບ ກວນ ໃຫ້ງ່ວງນອນ,ຫາກແຕ່ວ່າ ຊີວິດກໍເປັນໄປດັ່ງໃນຝັນ.

ຮຸ່ງເຊົ້າມື້ໃຫມ່ ຄົນຄົວກິນຍົກພາເຂົ້າມາໃຫ້ນາງອົ້ວ ຄືດັ່ງທີ່ເຄີຍປະຕິບັດມາ,ແຕ່ເຊົ້າມື້ນີ້ ນາງອົ້ວບໍ່ຢູ່ຄົນດຽວ ໃນຫ້ອງ, ຄົນຄົວກິນຕື່ນຕົກໃຈ ທັງບໍ່ເຊື່ອສາຍຕາ ຕົນເອງ,

ແຕ່ແລ້ວ ກໍຕ້ອງເຊື່ອ ແລະ ຮູ້ຈັກວ່າ ຜູ້ປູ່ນຳນາງອົ້ວ ແມ່ນຂຸນລູນັ້ນເອງ. ການກະທຳອັນຜິດປະເພນີ ໂດຍເຈດຕະນານີ້ ເປັນໄປຕາມການຮຽກຮ້ອງ ຂອງສອງ ຫົວໃຈ ທີ່ຍອມເສຍສະຫລະທຸກຢ່າງ ເພື່ອໃຫ້ສົມຫວັງ ໃນຄວາມຮັກ ແລະ ພ້ອມທີ່ຈະປະເຊີນກັບບັນຫາທຸກຢ່າງທີ່ຈະເກີດຂຶ້ນ ພາຍໃຕ້ລຸ່ມຟ້ານີ້.

ແມ່ນາງອົ້ວຮູ້ຂ່າວຈາກຄົນຄົວກິນ ແລ້ວກໍຟ້າວຟັ່ງໄປຍັງຫ້ອງລູກສາວ ດ້ວຍອາການເຄືອງ ແຄ້ນແຫນ້ນທອງສຸດຂະຫນາດ,ບັດນີ້ ຜູ້ເປັນແມ່ໄດ້ເຫັນກັບຕາຕົນເອງວ່າ ຄວາມຮັກຂອງທັງສອງ ມັນເກີນຂອບເຂດທີ່ຈະຢຸດຢັ້ງໄວ້ໄດ້ ຈຶ່ງຕີອົກດ້ວຍຄວາມເຫລືອໃຈວ່າ : "ລູກນີ້ຕັ້ງພາໂລເຮັດແນວບໍ່ດີ ເຮັດແນວເສຍຫນ້າເສຍຕາວົງຕະກຸນ ສອນແລ້ວສອນອີກ ກໍບໍ່ເຊື່ອຟັງ ລູກບໍ່ດີ ຜີຊິແກ່ມັນລົງຫມົ້ນະຮົກ ບໍ່ຫອີດແຫ້ງ ! " ແລ້ວກໍອວ່າຍໄປໃສ່ຂຸນລູວ່າ : "ໄປຮີບຫນີຢ່າມາຢູ່ຫນີ້ ! ຄົນຈັງໄຮ ບໍ່ຢຳລຸງປ້າອາວ ອາເລີຍ, ເມື່ອໃດຜີນ້ອງເຈົ້າບໍ່ແຕ່ງຂັບຫມາກມາສູ່ຂໍ ກໍບໍ່ຕ້ອງມາໃຫ້ເຫັນຫນ້າອີກ." ເພິ່ນທັງຮ້ອງທັງທຶບຕີນ.

ເມື່ອຕົກຢູ່ໃນສະພາບເປັນຈຳເລີຍ ຂຸນລູກໍຍໍມືໄຫວ້ ແລະ ສະແດງຄວາມນອບນ້ອມ ຂໍໂທດທີ່ໄດ້ລ່ວງເກີນເຖິງຂະໜາດນີ້ ທັງສາລະພາບວ່າ: "ລູກນີ້ມັກຮັກນາງອົ້ວ ຂໍໃຫ້ແມ່ເຫັນໃຈ ລູກຍອມເຮັດທຸກຢ່າງຕາມທີ່ແມ່ຕ້ອງການ".

ຂຸນລູຄິດຢູ່ຄາວນ້ອຍໜຶ່ງແລ້ວເວົ້າຕໍ່: ລູກນີ້ຂໍເປັນຊ້າງພັງພາຍຂອງແມ່ທ້ອນ ຂໍເປັນຄວາຍໄຖນາປູກເຂົ້າ ຂໍເຮັດສີ່ໃຫ້ແມ່ໄດ້ກິນປາ ຂໍເຮັດນາໃຫ້ແມ່ໄດ້ກິນເຂົ້າ ລູກຈັກລ້ຽງແຈ່ມເຈົ້າຄຳມ້ອນຊູ່ອັນ ລູກຂໍເປັນໝາດຳເຝົ້າໃຕ້ລ່າງ ຂໍເປັນ



ແມວດ່າງເຝົ້າກາງໂຮງແມ່ທ້ອນ."

ແມ່ນາງອົ້ວເວົ້າຕັດຄວາມວ່າ : ຢ່າມາຊູຊີອັນອາສາໃຫ້ເມື່ອຍ ຮີບຫນີດຽວນີ້ !"

ແຕ່ຂຸນລູກໍບໍ່ຍອມຫນີງ່າຍໆ ຍັງເວົ້າອ້ອນວອນ ແລະຍົກນິທານຕ່າງໆມາເວົ້າໃຫ້ເພິ່ນເຫັນໃຈ ແຕ່ກໍໄຮ້ປະໂຫຍດ, ທ້າວຈຶ່ງເອົາຕົວອອກຈາກແຫ່ງນັ້ນ ດ້ວຍຄວາມຫມົ່ນຫມອງສະເທືອນໃຈ.

ກັບຮອດບ້ານ ຂຸນລູຍິ່ງເຮຮັນຈົນຊີເປັນບ້າປ່ວງ, ຝ່າຍແມ່ອີ່ຕົນລູກຈຶ່ງເວົ້າ ອິ່ນອອຍໃຫ້ກໍາລັງໃຈ ແລ້ວກໍຂົ່ມໃຈລືມຄວາມຫງໍາເຫງືອດ ຈັດແຈງແຕ່ງຂັນຫມາກ ໄປສູ່ຂໍໃຫ້ຖືກຕ້ອງຕາມປະເພນີ ແລະ ໃຫ້ຂຸນຄວນພ້ອມດ້ວຍເຖົ້າແກ່ເດີນທາງໄປຍັງ ເມືອງກາຍ. ຂັນຄໍາເພື່ອສູ່ຂໍປະດັບດ້ວຍຂ່າຍແກ້ວເຫລື້ອມຍິບຍັບ, ໃນຂັນມີເງິນແປດຮ້ອຍ ຄໍາຫມາກຄຽນດ້ວຍໄຫມຄໍາ ຜ້າສະໄບ ແລະ ແພອີກຫລາຍຜືນ.

ໃນວັນລືກງາມຍາມດີນັ້ນ ຂຸນຄວນນຸ່ງເຄື່ອງເຕັມຍົດໃສ່ຕ້າງແກ້ວ ນຸ່ງຜ້າໄຫມ ເສື້ອປະດັບດ້ວຍຂ່າຍຄໍາ

ເຫລືອງເຫລື້ອມ ຄາດສັງວານຄຳປະດັບແກ້ວ ກ້າວສູ່ພິທີ ເພື່ອສູ່ຂໍຕາມປະເພນີຢ່າງສົມກຽດ. ທັງສອງຝ່າຍຖາມຂ່າວ ທຸກສຸກກັນ ຕໍ່ມາກໍມີການຟາຍເຫລົ້າ ເພື່ອຮຽກເຊີນຜີອາຮັກ ທັງຫລາຍໃຫ້ມາຊ່ອຍດົນບັນດານໃຫ້ຂຸນລູກັບນາງອົ້ວ ສຸກສົມຫວັງໃນຄວາມຮັກ ແລະ ໄດ້ຢູ່ຮ່ວມຊີວິດນຳກັນ.

ແຕ່ບໍ່ເປັນດັ່ງຄາດຫວັງໄວ້, ແມ່ນາງອົ້ວປະຕິເສດ ໂດຍທາງອ້ອມ ແລະ ບອກວ່າ ຂໍເຍື້ອນເວລາໄປສາມປີ ແລ້ວຈຶ່ງມາສູ່ຂໍອີກ. ຂຸນຄອນ ແລະ ຄະນະ ຈຶ່ງກັບຄືນເມືອ ດ້ວຍຄວາມຜິດຫວັງ. ຂຸນຄອນບອກແມ່ດ້ວຍຄວາມຄຽດຂົມ ເພາະເປັນການເສຍຫນ້າ ທີ່ການສູ່ຂໍຖືກປະຕິເສດ. ແຕ່ແມ່ ກໍບອກໃຫ້ລູກເຮັດໃຈເຢັນໆໄວ້ ແລະ ຢ່າຟ້າວເສຍໃຈເທື່ອ ຂໍໃຫ້ໄດ້ທຳການສູ່ຂໍເປັນເທື່ອທີສອງກ່ອນ, ຖ້າວ່າບໍ່ຍອມໃຫ້ ແທ້ໆ ແລ້ວຈຶ່ງໄປລັບເລວເອົາ ບໍ່ຕ້ອງຢ້ານກົວ ເຖິງແມ່ນ ຫລັງຄາ ຫລື ກຳແພງເມືອງຈະເປັນຫີນຜາກໍຕາມ.

ຂຸນຄອນສະຫງົບສະຕິອາລົມລົງໄດ້ ແຕ່ຂຸນລູຮູ້ສຶກໄຟ ລາມ ໄຫມ້ໃນຫວງອົກຢູ່ຢ່າງ ບໍ່ມີຍາມເຊົາ.

---

ຂ່າວການສູ່ຂໍນາງອົ້ວໄປເປັນໃພ້ເມືອງຊອງ ແລະ ເຖິງແມ່ນວ່າ ແມ່ນາງອົ້ວ ໄດ້ປະຕິເສດໄປແລ້ວກໍຕາມ ແຕ່ຂຸນເຫືອງແຫ່ງເມືອງຊຽງຂອນ ກໍບໍ່ສະບາຍໃຈ ຈຶ່ງຫາທາງກີດຂວາງໃຫ້ນາງອົ້ວ ຂາດຈາກຂຸນລູ່ຢ່າງເດັດຂາດ. ດັ່ງນີ້ ຂຸນເຫືອງ ຈຶ່ງເດີນທາງພ້ອມເອົາເຄື່ອງບັນນາການຈຳນວນຫລວງຫລາຍ ໄປຍັງເມືອງກາຍ ເພື່ອໃຫ້ເປັນແນວຜູກມັດນາງອົ້ວໄວ້ ເຊັ່ນ: ຄຳຫມື່ນຫນຶ່ງ, ເງິນເຈັດແສນ, ງົວ ຄວາຍ ແລະ ຫມູ ແນວລະຮ້ອຍໂຕ, ເປັດ ແລະ ໄກ່ ໃສ່ຍາງແນວລະຮ້ອຍຍາງ, ເຫລົ້າໄຫຊາວໄຫ, ຫມາກໂມຫມາກແຕງຫມາກເຜັດ ຫມາກເຂືອຜ່ອຍ ຫມາກແຄ້ງ ຂີງ ແລະ ຂ່າຈຳນວນຫລວງຫລາຍ. ເຄື່ອງເຫລົ່ານີ້ຖືກລຳລຽງໄປເປັນຂະບວນຍາວຍືດ ມຸ່ງຫນ້າສູ່ເມືອງກາຍ, ມີແສນຫລວງເປັນຜູ້ອອກຫນ້າໄປກ່ອນ, ຖັດມາແມ່ນຂຸນເຫືອງໃນຊຸດເຕັມຍົດ ຂີ່ມ້າດຸ່ງໄປໂດຍຕັ້ງຄວາມຫວັງແນ່ວແນ່ ທີ່ຈະໃຫ້ໄດ້ນາງອົ້ວມາໄວ້ເປັນມິ່ງເມືອງ.

---

ເມື່ອຮອດເມືອງກາຍ ການຕ້ອນຮັບເປັນໄປຢ່າງອົບອຸ່ນ ແລະ ສົມສັກສີ. ຢູ່ທີ່ຫ້ອງອັນກວ້າງໃຫຍ່ປະດັບເອ້ງາມຕາ ຂຸນເທືອງມອບເຄື່ອງບັນນາການໃຫ້ແມ່ນາງອົ້ວ ຊ້ອງຫນ້າເຈົ້າໂຄດລຸງຕາ ໂດຍກ່າວວ່າ : "ຄຳຫມື່ນນີ້ເປັນຄ່າດອງເງິນເຈັດແສນເອົາສົມມາພີ່ນ້ອງເຖົ້າແກ່ສູ່ຄົນ, ຂໍໃຫ້ແມ່ຮັບເອົາທ້ອນ."



ແມ່ນາງອົ້ວຢູ່ໃນອາການເບີກບານມ່ວນຊື່ນ ກ່າວຮັບເອົາດ້ວຍຄວາມຍິນດີ ແລະ ວ່າບໍ່ມີຄວາມຂັດຂ້ອງໃດໆທີ່ສອງເມືອງເຮົາຈະເສີມສ້າງ ຂົວຄໍາຫຼວງໄຕ່ ໄປເມືອງພຸ້ນກິນປາ ມາເມືອງພີ້ກິນຊີ້ນ ຍິນສະໜຸກມ່ວນແມ້ງ ສະຫວັນຟ້າເກີ່ງກັນ.

ແຕ່ຂຸນເທືອງກໍບໍ່ແຈບໃຈ ຈຶ່ງຂໍໃຫ້ເອີ້ນ ນາງອົ້ວມາປາກົດຕົວຕໍ່ໜ້າພີ່ນ້ອງທັງສອງກໍ້າສອງຝ່າຍ ແລະຖາມເບິ່ງຄວາມຮູ້ສຶກໃຈຂອງນາງ. ແມ່ເປັນຜູ້ໄປນໍາເອົານາງອົ້ວໂດຍຕົນເອງ, ຕໍ່ມາພາຍໃນຫ້ອງກົ່ງຮູບສະຫງັດລົງ, ນາງອົ້ວກ້າວເຂົ້າມາ ດ້ວຍຄວາມສະຫງ່າຄ່ຽມຄົມ ຄືອາດນາງຫົງ ຊົ່ງຄືລອຍລົງມາຈາກເທິງຟ້າ. ທຸກຄົນອ້າປາກຄ້າງ ເພາະບໍ່ອາດພັນລະນາອອກມາໄດ້ ໃນທີ່ສຸດກໍມີສຽງໜຶ່ງດັງຂຶ້ນ: "ປານນາງຟ້າລົງມາຈາກສະຫວັນ".

"ງາມປານອິນແຕ້ມ." ອີກຫລາຍສຽງວ່າແລ້ວທົ່ວຫ້ອງກໍມີມັນດ້ວຍສຽງ ຍ້ອງຊົມເຊີຍ.

ຂຸນເຫືອງແນມເບິ່ງນາງຢ່າງບໍ່ພັບຕາ ຈົນຮູ້ສຶກຫວັ່ນໃນໃຈ ເພາະສຳນຶກໄດ້ວ່າ ຮູບຮ່າງຕົນເອງນີ້ ມັນຄືດັ່ງໂຕແຮ້ງ ແລ້ວຈະໄປຄູ່ກັບຫົງໄດ້ຈັ່ງໃດ.

ແມ່ນາງອົ້ວກ່າວວ່າ : "ຂຸນເຫືອງມາຂໍເປັນພີ່ເປັນນ້ອງ ມີຄຳຫມື່ນຫນຶ່ງມາເປັນຄ່າດອງ, ເງິນອີກເຈັດແສນ ສຳລັບ ສົມມາເຖົ້າແກ່, ແລະ ເຄື່ອງຢູ່ຂອງກິນມາພ້ອມຄົບຖ້ວນ, ຖ້າລູກຕອບຮັບ ກໍຈະຈັດພິທີແຕ່ງດອງໃນມື້ອື່ນມື້ຮືນີ້ໂລດ. ລູກບໍ່ມີ ຫຍັງຂັດຂ້ອງແມ່ນຕ່ວາ."

ນາງອົ້ວຢູ່ໃນທ່າບໍ່ອາດປະຕິເສດໄດ້ ທັງບໍ່ຢາກໃຫ້ ແມ່ເສຍຫນ້າ ຈຶ່ງຕອບວ່າ : ຄັນເປັນຄວາມປະສົງຂອງແມ່ ລູກກໍບໍ່ຂືນ ".

ຄຳຕອບນີ້ ເປັນທີ່ພໍໃຈຂອງທຸກຄົນ ແຕ່ດີໃຈກວ່າຫມູ່ ແມ່ນຂຸນເຫືອງ ທີ່ຫົວຍ້ານໆ ຈົນນ້ຳຫມາກຍ້ອຍຄາງ ແດງຈື່ງຄື່ງ.

ຕໍ່ມາ ທຸກຄົນກໍກິນເຂົ້າຊຸມແຊວກັນ ອາຫານມີລາບກ້ອຍ, ເຫລົ້າໄຫຖືກຈັດມາບໍລິການຢ່າງບໍ່ອັ້ນ. ເມື່ອເຫລົ້າເຂົ້າປາກ

ສຽງກໍແຮ່ງເນືອງນັນ ຈົນຟັງບໍ່ໄດ້ຖ້ອຍໄດ້ຄວາມ, ແຕ່ລວມຄວາມແລ້ວ ທຸກຄົນມ່ວນຊື່ນດີໃຈ ຍົກເວັ້ນນາງອົ້ວ. ນາງວາງຕົວ ດ້ວຍຄວາມລຳບາກໃຈ ແລະ ບໍ່ອາດເຊື່ອງອຳຄວາມຮູ້ສຶກໄດ້ ຈຶ່ງຂໍຕົວເຂົ້າໄປໃນ ຫ້ອງ.

ນາງອົ້ວຢູ່ລຳພັງຄົນດຽວ ມີເງົາເປັນເພື່ອນ ແລະ ຮູ້ສຶກປ່ຽວພອຍ ຄືດັ່ງງົວນ້ອຍພັດຫລົງແມ່ຢູ່ກາງທົ່ງກວ້າງ, ໃນຫົວໃຈນາງມີແຕ່ຂຸນລູ, ຄວາມຄິດນັ້ນລ່ອງລອຍໄປໄກ, ໄປແສນໄກເທົ່າໃດ ກໍເຫັນແຕ່ຂຸນລູ ທີ່ປາກົດເປັນພາບມົວສະຫລົວດັ່ງເງົາໃນນ້ຳ. ນາງພັບຕາບາດຍາວໆ ນ້ຳຕາໄຫລຍ້ອຍລົງອາບແກ້ມ ບໍ່ມີຂຸນລູເຊັດນ້ຳຕາໃຫ້ ຄືດັ່ງກ່ອນມາ, ເຊັດນ້ຳຕາໃຫ້ຕົນເອງກໍເທົ່າກັບຊ່ອຍໃຫ້ມັນໄຫລອອກຕື່ມ. ນາງຮ່ຳຮອນໃນໃຈທັງສະອື້ນ... ຂ້ອຍຄິດບໍ່ເຫັນຫຍັງອີກ, ບໍ່ມີຜູ້ໃດເຫັນໃຈຂ້ອຍ, ຄວາມ ຄິດມັນວົນວຽນຢູ່ແຕ່ຄວາມຕາຍ, ຕາຍໃຫ້ມັນຫວິດຄວາມອຸກອັ່ງທໍລະມານ ໃຫ້ມັນເຫລືອແຕ່ຄວາມວ່າງເປົ່າ, ບໍ່ມີສຽງສະອື້ນ ບໍ່ມີນ້ຳຕາ, ທຸກສິ່ງທຸກຢ່າງຄົງງຽບສະຫງັດ.

ຄ່ຳແລ້ວ ຂອບຟ້າຄ່ອຍໆລັບຫາຍໄປກັບຄວາມມືດ, ຟ້າບໍ່ເຄີຍເຖົ້າ ແຕ່ຟ້າກໍມີຄວາມເຫງົາປາກົດໃຫ້ເຫັນ ແລະ ມີຄວາມງຽບແຜ່ຄຸມ. ຄວາມງຽບມີນ້ຳໜັກເມື່ອເຈົ້າຢູ່ຫ່າງ ເມື່ອເຈົ້າຈາກໄປ ເມື່ອຫົວໃຈເຮົາສອງດວງພົບກັບທາງຕັນ. ຂ້ອຍຮູ້ສຶກວ່າ ໂລກນີ້ດັບມອດລົງແລ້ວ. ລາກ່ອນຕາເວັນເອີຍ ຕາເວັນດວງເກົ່າ ທີ່ໃຫ້ກຳເນີດວັນໃໝ່ ແລະ ວັນຕໍ່ໆໄປ, ແຕ່ວັນໃໝ່ກໍຈະບໍ່ມີຂ້ອຍອີກແລ້ວ.

ນາງອື້ວຈັດແຈງນຸ່ງເຄື່ອງໃຫ້ງາມ ຜົມສຽບໃສ່ປັກປິ່ນເກົ້າ ຫູໃສ່ຕ່າງ ຢ່ອນລົງພຽງແກ້ມ ແຂນສຸບມ້າວເຫລື້ອມໃສ, ນິ້ວສຸບແຫວນວົງງາມ, ເອົາສະໃບຄຳສີແດງຄຽນຄໍ, ແລະ ດ້ວຍສາຍຕາເລື່ອນລອຍ ນາງເບິ່ງໄປທົ່ວຫ້ອງ, ເປັນການເບິ່ງ ເທື່ອສຸດທ້າຍ ທ່າມກາງບັນຍາກາດເສົ້າສ້ອຍ. ແລະ ຈາກສ່ວນເລິກຂອງຈິດວິນຍານ ນາງກ່າວອຳລາ ດ້ວຍສຽງສັ່ນໆ...ຢູ່ດີເຍີ ຫ້ອງຫໍທີ່ເຄີຍນອນ,ໝອນ ມ່ານ ມຸ້ງທີ່ເຄີຍສຳຜັດມາຕະຫລອດຊີວິດ, ຂ້ອຍຂໍລາທຸກສິ່ງທຸກຢ່າງ

ທີ່ເຄີຍຈັບບາຍໃຊ້ສອຍ ແລະ ຝາກຮອຍມືຮອຍຕີນໄວ້ : ຫລາເຂັນຝ້າຍວາງຢູ່ແຄມຝາ, ດ້ວງນ້ອນວາງຊ້ອນກັນຢູ່ຢ່າງເປັນລະບຽບ, ກີ່ຕໍ່າຫູກຕັ້ງຢູ່ເຊຍເຮືອນມາດົນນານ, ບວຍຕັກນໍ້າ ພາດຢູ່ປາກໄຫ, ປ່ອງຢ້ຽມໄຂອ້າເບິ່ງຕາເວັນຍາມເຊົ້າ."

ແລ້ວນາງກໍລັກລອບຫນີອອກຈາກໂຮງ ໂດຍບໍ່ມີໃຜຮູ້ ເຫັນນອກຈາກຊ້າງແມ່ ໂຕຊື່ແພງສີ, ນາງກ່າວລາມັນວ່າ: "ຢູ່ດີເຍີແພງສີ ຊາດນີ້ມີເວນກໍາຈຶ່ງຂໍລາໄປຈົນຕະຫລອດຊີວິດ..."

ນາງໄປຮອດກາງປ່າ ທ່າມກາງຄວາມມືດ ໄປຢຸດຢູ່ກ້ອງຕົ້ນຊຸມພູ ແລ້ວເວົ້າວ່າ :

"ຕົ້ນຊຸມພູເອີຍ ຂ້ອຍຂໍວອນເຈົ້າ ຈົ່ງກ່ອງງ່າລົງມາແດ່ທ້ອນ ຂ້ອຍຈັກອາໄສເຈົ້າລອຍຂຶ້ນສູ່ສະຫວັນ."

ແຕ່ເທວະດາປະຈໍາຕົ້ນໄມ້ປະຕິເສດ. ມີສຽງເວົ້າອອກມາວ່າ "ເຮົາບໍ່ເຄີຍກ່ອງງ່າລົງເອົາຜູ້ໃດ, ໃຜຈັກແຂວນຄໍໃສ່ງ່າເຮົາບໍ່ໄດ້ເດັດຂາດ".

ແລ້ວນາງກໍຍ່າງຕໍ່ໄປ ເບັດໜ້າໃສ່ຕົ້ນໄມ້ຕົ້ນອື່ນ ແຕ່ກໍຖືກປະຕິເສດອີກ.

"ເຮົາບໍ່ຢາກໃຫ້ຄົນງາມໆ ມາທຳລາຍຊີວິດແບບນີ້ມັນທົນເບິ່ງບໍ່ໄດ້." ເທວະດາແຫ່ງຕົ້ນໄມ້ວ່າ.

ນາງຍ່າງໄປຫາຕົ້ນໄມ້ອີກຫລາຍຕົ້ນ ທ່າມກາງລາຕີອັນງຽບສະຫງັດ, ໃນທີ່ສຸດ ກໍໄປພົ້ຕົ້ນຈອງຈັນໃຫຍ່ ທີ່ແຜ່ກິ່ງກ້ານກອມບໍລິເວນກວ້າງ, ບັນຍາກາດວັ່ງເວຄື ປ່າຊ້າ, ຈອງຈັນຕົ້ນນີ້ມີຜີຮັກສາຢູ່.

ນາງອົ້ວເວົ້າຂຶ້ນວ່າ: "ຈອງຈັນເອີຍ ກ່ອງງ່າເຈົ້າລົງມາເອົາຂ້ອຍແດ່ທ້ອນ!"

ຕົ້ນຈອງຈັນ ໄຫວຕົວຢ່າງແຮງ. ຜີອາຮັກແຜງລິດຂອງມັນ ແລ້ວເຮັດໃຫ້ງ່າກ່ອງລົງ. ນາງອົ້ວຈັບງ່າໄວ້ແລ້ວຮ່ຳຮອນຫາຂຸນລູ:

"ອ້າຍຂຸນລູ ນ້ອງຂໍລາໄປກ່ອນ ຊາດໜ້າຄ່ອຍຈວບກັນໃໝ່ ຖ້າອ້າຍມາທັນຢູ່ແຫ່ງນີ້ ນ້ອງກໍຄົງບໍ່ຕາຍ ສອງເຮົາຈະເປັນຄູ່ກັນໄປຕະຫລອດ."

ນາງຫລຽວໄປເບິ່ງອ້ອມຂ້າງ ບໍ່ມີຂຸນລູ ບໍ່ມີຜູ້ໃດທັງນັ້ນ, ມີແຕ່ຄວາມງຽບສະຫງັດວັ່ງເວ. ນາທີຕໍ່ມາ ນາງກໍຕັດສິນໃຈອໍາລາໂລກໄປ. ບໍ່ມີມື້ໃຫມ່ສໍາລັບນາງອົ້ວອີກ. ຮ່າງຂອງນາງຫ້ອຍຕ້ອນແຕ້ນຢູ່ງ່າຈວງຈັນແຫ່ງນີ້.

ທີ່ໂຮງຄືນນັ້ນ ທຸກຄົນແປກຕ່າງໃນໃຈທີ່ຊ້າງຊີ່ແພງສີແຜດສຽງຮ້ອງ ທັງໃຊ້ງວງດຶງທື້ນໂສ້ຢູ່ບໍ່ເຊົາ. ແມ່ນາງອົ້ວ



ໃຊ້ຄົນໄປເບິ່ງຊ້າງ ແລະ ໃຫ້ສາວໃຊ້ເຂົ້າໄປຫ້ອງນາງອົ້ວ ເພາະບໍ່ປາກົດເຫັນນາງນັບແຕ່ພິທີສູ່ຂໍເປັນຕົ້ນມາ. ບໍ່ດົນ ສາວໃຊ້ກໍແລ່ນມາບອກວ່າ ເຫັນແຕ່ຜ້າບາງຜືນພາດຢູ່ໃນຫ້ອງ ແຕ່ບໍ່ເຫັນນາງອົ້ວເລີຍ. ແມ່ນາງອົ້ວຕົກໃຈສຸດຂີດ ແລະ ສັ່ງໃຫ້ຊອກຫາລູກສາວເປັນສົນລະວົນ. ຜູ້ຄົນພາກັນໄຕ້ກະບອງ ໄຕ້ທວນເຍືອງທາງນຳຫາໃນຄືນນັ້ນ, ພວກໜຶ່ງໄປທາງເໜືອ ພວກໜຶ່ງໄປທາງເຮືອ ແລະ ພວກໜຶ່ງໄປຍັງເມືອງຊອງ ເພາະເຊື່ອວ່າ ນາງອົ້ວຈະຕ້ອງໄປຫາຂຸນລູທີ່ເມືອງນີ້, ແຕ່ແລ້ວກໍບໍ່ເຫັນຮ່ອງຮອຍເລີຍ.

ຂຸນລູເວົ້າສຽດໃສ່ພວກທີ່ມາຫາວ່າ: "ຜີວ່ານາງມາຜີແທ້ເຮົາຈະເອົາເມືອງແລກເອົາເລີຍ, ແຕ່ນີ້ນາງບໍ່ໄດ້ມາ, ເຮົາບໍ່ໄດ້ເຊື່ອງອຳແຕ່ຢ່າງໃດ."

ແລ້ວເຂົາກໍລາຂຸນລູກັບເມືອເມືອງກາຍ.

ສ່ວນຂຸນເທືອງໜ້າຫລ່າຕາຕາຍ ເປັນຮ້ອນເປັນຮົນແລ້ວກໍສັ່ງໃຫ້ເສນາຂອງ ຕົນອອກນຳຫາໄປທົ່ວປ່າດົງພົງໄພ.

"ຖ້າບໍ່ໄດ້ນາງຄືນມາ ກູຈະຕັດຄໍພວກສູທຸກຄົນ !" ຂຸນເທືອງບັນຊາຢ່າງໜັກແໜ້ນ.

ຄວາມສັບສົນພາຍໃນໂຮງ ດຳເນີນໄປຕະຫລອດຄືນ, ມີຜູ້ຮ່ຳໄຫ້, ມີຜູ້ຈົ່ມຄາງໂອຍໆ ດ້ວຍຄວາມເປັນຫ່ວງ ແລະ ມີທັງຜູ້ຂັດເຄືອງໃນໃຈ ທີ່ມີເຫດການບໍ່ດີເກີດຂຶ້ນ ປະສົມກັບສຽງແຜດຮ້ອງຂອງຊ້າງແພງສີ ທີ່ຫ່ວງອາໄລຫາເຈົ້າຍິງຜູ້ເປັນເຈົ້າຂອງ ຂອງມັນ.

ທຸກຝ່າຍທີ່ຂຽວຄືນໄປຊອກຫານັ້ນ ໄດ້ກັບມາໂດຍບໍ່ພົບຮ່ອງຮອຍໃດໆ ຂອງນາງອົ້ວເລີຍ. ຄວາມໂສກເສົ້າເສຍດາຍຈຶ່ງແຜ່ຄຸມໄປທົ່ວໂຮງ.

ຂຸນເທືອງຈົ່ມວ່າ: "ກູກໍປອງເອົາແກ້ວ ນາງງາມອົ້ວຄ່ຽມຫວນຊີລຸລາບໄດ້ ເລີຍຊ້ຳບໍ່ເຫັນ..."

ສ່ວນແມ່ນາງອົ້ວຈົ່ມຮ່ຳໄຮຫາລູກປານໃຈຊິຂາດ :

"ອົ້ວອ່ອນມາເລົ່າໄປຫົນກ້ຳ ທາງໃດຈາກອີແມ່ເສຍນີ້ ແມ່ກໍຄຶດຕໍ່ເຈົ້າ ສົມສ້າງສືບເມືອງ ຫາກບໍ່ເອົາບາທ້າວຂຸນເທືອງ ກໍບອກແມ່ເສຍແມ ຫລືວ່າມັກບ່າວທ້າວຂຸນລູ

ແພງເພື່ອນກໍດີ ແມ່ບໍ່ຂືນອ່ອນອົ້ວຕາມແຕ່ເຈົ້າຊິປູກແປງ. ໂອນໍ ແມ່ນີ້ ເປັນດັ່ງຕາບອດແລ້ວ ເບື້ອງຫນຶ່ງມິເຫັນ ສາຍໃຈກູ ຢູ່ທີ່ໃດເດເຈົ້າ ຂໍແກ່ອິນທາເຈົ້າ ພົນມາເຍື້ອນໂຜດ ບຸນຂ້ອຍ ທານມາກລົ້ນ ມາຄ້ຳໃຫ້ເຫັນ ແດ່ແມ..."

ຮຸ່ງເຊົ້າມື້ໃຫມ່ ກາໂຕຫນຶ່ງບິນມາຈັບຫລັງຄາໂຮງ ແລ້ວຮ້ອງບອກຂ່າວວ່າ:

"ລູກສາວໃຜເດ ພວມສອນສາວ ຄີງຂາວປານຫ່ອນຢວກ ທັດດອກໄມ້ ປັກປິ່ນຜົມດຳ ໃສ່ຕ່າງຄຳກ່າຍແກ້ມ ຫ້ອຍຕ້ອນ ແຕ້ນຢູ່ງ່າຈວງຈັນ..."

ຮ້ອງແລ້ວກາໂຕນັ້ນກໍບິນໄປ. ແມ່ນາງອົ້ວໄດ້ຍິນ ຂ່າວຮ້າຍ ກໍເປັນລົມສະຫລົບ, ສາວໃຊ້ຕ້ອງໂຊມເອົາ ແລະ ຊັກຊຸ່ນ ທັງເອົານ້ຳພົ່ນໃສ່ ຈຶ່ງຟື້ນຄືນມາ. ສ່ວນຊາວເມືອງ ຫລາຍຄົນ ພາກັນມຸ່ງຫນ້າໄປຍັງປ່າດ້ານເຫນືອ ຕາມທິດທາງ ທີ່ກາບິນໄປ. ເມື່ອຮອດຕົ້ນໄມ້ທີ່ກາຈັບຢູ່ ກໍຈຶ່ງເຫັນຄາບ ນາງອົ້ວຫ້ອຍຢູ່ຕົ້ນໄມ້ແຫ່ງນັ້ນ. ເຂົາເຈົ້າແກ້ເອົານາງ ຈາກ

ງ່າໄມ້. ຕໍ່ມາແມ່ນາງອົ້ວນຳໄປຮອດ ແລ້ວກໍຈັດລ້າງສວ່າຍ ອາບນ້ຳໃຫ້ ແລະ ທົດດ້ວຍນ້ຳຫອມ ແລ້ວເອົາໄປດອຍໄວ້ຢູ່ ຜາມທີ່ຖືກສ້າງຂຶ້ນແຄມປ່າ.

ແມ່ນາງອົ້ວນັ່ງຮ້ອງໄຫ້ຮ່ຳໄຮຫາລູກ ທັງເອົາມືຕີອົກ ດ້ວຍຄວາມເຫລືອໃຈ :

" ບັດນີ້ອົ້ວອ່ອນນ້ອຍ ປະແມ່ໄປຕາຍນີ້ບໍ ອົ້ວແມ່ເຮີຍ ຄຳແພງແມ່ເຮີຍ ແມ່ລ້ຽງເຈົ້າແສນສິ່ງໂຕປາ ແມ່ນາ ແມ່ລ້ຽງເຈົ້າແສນສິ່ງໂຕໄກ່ ອົ້ວແມ່ເຮີຍ ສາຍຄໍແມ່ເຮີຍ ຮັກຊູກວ່າລຸງຕາແທ້ນາ ປະອາວອາເສຍບໍ່ເອື້ອແທ້ບໍ ປະເສື່ອ ສາດຜ້າຫົ່ມທັງຫມອນ ແລບໍ ... ໂອບໍ ຫົວໃຈອ້ອຍ ນາງງາມ ລູກແມ່ກູເຮີຍ ອົກແມ່ຊິແຕກນ້າງ ນຳອົ້ວມິ່ງມອນ ຄັນວ່າ ປຸນປູກໃຫ້ຂຸນລູບາບ່າວ ຍັງຈັກໄດ້ເບິ່ງຫນ້າບໍ່ມີຫລ້າງວ່າ ຊິຕາຍແມ່ນາ ອົ້ວແມ່ເຮີຍ ດວງຕາແມ່ເຮີຍ ຟ້າຮ້ອງຮ່ອນ ເມືອບົນ ຝົນຕົກລົມບໍ່ຮູ້ເອື້ອນ ລູກອ່ອນຫລ້າຊິໄປຊົ້ນຢູ່ ແຫ່ງໃດນີ້ເດ ... "

ສ່ວນຂຸນເທືອງ ກໍຈົ່ມເສຍໃຈວ່າ:

"ໂອນໍອົ້ວອ້ອຍເຮີຍ ສາຍໃຈອ້ອຍເຮີຍ ຕົກຕາວ່າຊິເປັນເມຍອ້າຍ ແລ້ວເລີຍເລົ່າຕາຍເສຍນີ້ນໍ ອົ້ວອ້ອຍເຮີຍ ເງິນລ້ານພີ່ກໍເອົາມາຫາເຈົ້ານາ ຄຳຊາວແສນລ້ານຊັ່ງພີ່ກໍເອົາມາຕ້ອນເຈົ້ານາ ໂອນໍຫນ່ວຍຕາອ້ອຍເຮີຍ ຄຳແສນອ້າຍຊິຕີແປ້ນກີ່ໃຫ້ເຈົ້າເນ ຄຳຫ້າຮ້ອຍອ້າຍຊິຕີຊ້າຫລອດໃຫ້ເຈົ້າຕໍ່າຫູກທໍໄຫມ ພີ່ນາ ໂອນໍອົ້ວເຮີຍ ພັນລ້ານພີ່ກໍເອົາມາແທນແຫ່ເຈົ້ານີ້ແລ້ວ ພັນແສນນາງອງເອົາອົ້ວ ແຫ່ແຈ່ມເຈົ້າເມືອສ້າງສີບເມືອງ ..."

ບັນຍາກາດເຕັມໄປດ້ວຍຄວາມໂສກເສົ້າເຫງົາຫງອຍ. ຜູ້ຄົນພາກັນຫລັ່ງນ້ຳຕາ

ການຄົບງັນດຳເນີນໄປຢ່າງໃຫຍ່ໂຕ ມີຄົນຫລັ່ງໄຫລມາຈົນລົ້ນຜາມ. ຄົນທົ່ວໄປຕ່າງກໍຈົ່ມເສຍດາຍ ແລະ ຫ່ວງອາໄລຫາ ສາວນ້ອຍຜູ້ຈາກໄປຢ່າງບໍ່ມີວັນກັບມາອີກ. ທາງສຽງວ່າຍ້ອນແມ່ອັດຂວາງເຫລືອເຫດ ທັງທີ່ຂຸນລູ ກໍໄດ້ມາສູ່ຂໍແລ້ວ

ດັ່ງນີ້ ນາງອົ້ວຈຶ່ງໄດ້ຕັດສິນໃຈອໍາລາໂລກໄປ ເພື່ອໜີຄວາມທຸກທໍລະມານໃຈ.

ແມ່ນາງອົ້ວແຕ່ງໃຫ້ຄົນຂີ່ມ້າດ່ວນ ໄປບອກຂຸນລູ ທີ່ເມືອງຊອງ ໃຫ້ມາຮ່ວມໄວ້ ອາໄລ. ຂຸນລູຮູ້ຂ່າວດ້ວຍຄວາມໂສກເສົ້າສະອື້ນຫວງ ແລ້ວກໍຈັດແຈງເອົາເຄື່ອງກິນທານມາຫລວງຫລາຍ ມີງົວ ຄວາຍ ເປັດ ໄກ່ ເຂົ້າ ແລະ ເຫລົ້າໄຫ ໂດຍໃຫ້ຄົນຈໍານວນ 300 ລໍາລຽງມາເປັນຂະບວນ. ຂຸນລູກັບຂຸນຄວນ ຜູ້ເປັນນ້ອງຊາຍ ຂີ່ມ້າ ອອກໜ້າດ່ວນມາ, ພໍຕາເວັນຄ້າຍ ທັງສອງກໍມາຮອດບ່ອນງັນສົບ.

ແມ່ນາງອົ້ວພົບກັບຂຸນລູ ດ້ວຍຄວາມຮູ້ສຶກກະດາກໃຈ ແລະ ຈົ່ມກິນແໜນງ ທີ່ໄດ້ປະຕິເສດຂຸນລູຕະຫລອດເວລາຜ່ານມາ. ເພິ່ນກ່າວວ່າ:

"ແມ່ກໍເຫັນໜ້າເຈົ້າບາບ່າວຂຸນລູ ເປັນດັ່ງເຫັນດວງຕາຄ່ຽມເມືອງແພງລ້ານ. ແມ່ນີ້ຕັ້ງວ່າເຖົ້າຫົວຫວາຍ ຕັ້ງວ່າເຖົ້າ

ດາຍດອກ ແທ້ນາ ອົ້ວນ້ອຍແມ່ໄປຜູກລໍຕາຍຄອບບາລູເຮີຍ ຍາມເມື່ອຂຸນຄວນເອົາທີ່ຫມາກມາຫມາຍ ຍາມເມື່ອ ເອົາ ສາຍພູມານອບ ແມ່ເລົ່າຄິດບໍ່ສອດແທ້ນາ. ຂໍພອນທ້ອນ ທັງສອງຍອມໂທດ ແມ່ຫາກໄດ້ຕັດບໍ່ໃຫ້ຂຸນແທ້ທ່ຽງຈິງ ແມ່ແລ້ວ. ບັດນີ້ ສັນໃດເຈົ້າ ຍັງຊິໄດ້ອ່ອນອົ້ວນັ້ນເລົ່າຄືນມາ ດັ່ງນັ້ນ ບໍ່ກວ່າແຕ່ຫລານຊາຍກູ ຮ່ຳເຜີງດູທ້ອນ ຜີວ່າສາຍໃຈ ອ້ອຍຄືນມາສັນເກົ່າ ກໍດີ ແມ່ຈັກປູນມອບບ້ານ ເວນສ້າງສືບ ເມືອງ ... "

ຂຸນລູໄປນັ່ງລົງຂ້າງນາງອົ້ວ ເອົາມືຂວາຈັບແຂນ ນາງໄວ້ ມືຊ້າຍລູບເກົ້າຜົມ ແລະ ເວົ້າວ່າ:

" ອົ້ວພີ່ເຮີຍ ດວງຕາພີ່ເຮີຍ ອ້າຍມາແລ້ວນັ່ງຢູ່ຂ້າງ ກ້ຳຂວານີ້ນາ ຂຸນຄວນນັ່ງຢູ່ ຂ້າງກ້ຳຊ້າຍນີ້ນາ ເຊີນນ້ອງ ນາດໄທ້ ອົ້ວຄ່ຽມຄືນມາ ພີ່ເຍີ ... "

ທ້າວໄທວ້ອອນເຖິງພະອິນພະພົມ ຢູ່ເທິງຟ້າໃຫ້ມາຊ່ອຍ ໂຜດເອົານາງຄືນມາ ໂດຍເອົາໂອຄຳຕັ້ງໄວ້ ແລ້ວອະທິດ

ຖາມວ່າ ຖ້ານ້ຳຕາຫລັ່ງລົງເຕັມໂອແລ້ວ ໃຫ້ນາງຟື້ນຄືນມີຊີວິດອີກ.

ທ້າວຮ່ຳຮອນຢູ່ເປັນເວລາດົນນານ ນ້ຳຕາກໍຫລັ່ງລົງໃສ່ໂອຄຳ ຈົນເກືອບຊິເຕັມ. ຮ່າງຄີງນາງອົ້ວເຫນັງຄ່ອຍໆແລ້ວຢຸດໄປ ຕໍ່ມາກໍເຫນັງອີກ ແລະ ຄ່ອຍໆຄືດັ່ງຕື່ນຈາກອາການຫລັບໄຫລ ມາເປັນເວລາພັນໆປີ. ຫົວຂອງນາງຍໍຂຶ້ນຊ້າໆ ຕາຄ່ອຍໆມືນພໍຮີບຮີ່, ແຕ່ໃນທັນໃດ ແມວໂຕຫນຶ່ງແລ່ນພວດມາຕຳໂອຄຳຂວ້ຳ ນ້ຳຕາເລີຍໄຫລຖິ້ມ ບໍ່ເຫລືອ. ຮ່າງຄີງນາງອົ້ວກັບມິດຊ້ອຍມ້ອຍດັ່ງເດີມ. ຂຸນລູຕົກສະເງີ້ບໍ່ຮູ້ຊິເຮັດວິທີໃດ ໄດ້ແຕ່ເອົາມືຕີອົກທັງຮ້ອງໄຫ້ ດ້ວຍຄວາມເຫລືອໃຈ. ສຽງຜູ້ຄົນໃນຜາມ ດັງອື້ງຄະນຶງ, ເຂົາເຈົ້າເວົ້າຊຶມກັນວ່າ ເອີກແຜນ ເປັນຜູ້ວາງແຜນໃຫ້ຄົນເອົາແມວມາລັກເຊື່ອງໄວ້ໃນບໍລິເວນຜາມ ແລ້ວປ່ອຍໃຫ້ມັນແລ່ນໄປຕຳໂອຄຳຈົນຂວ້ຳ ທັງນີ້ ເພາະນາງຫລົງມັກ ຂຸນລູຢູ່ຂ້າງດຽວ ແຕ່ເຫີງນານແລ້ວ. ເຫດການນີ້ເຮັດໃຫ້ຄວາມຫວັງຂອງທຸກຄົນ ພັງທະລາຍລົງ.

---

ນາງອົ້ວຫລັບແຈບຈົມດັ່ງຫີນໃຕ້ພື້ນດິນ ເປັນເທື່ອສຸດທ້າຍ ແລະ ຕະຫລອດກາລະນານ.

ເມື່ອໄດ້ພະຍາຍາມເຮັດທຸກວິທີ ເພື່ອຊ່ອຍນາງອົ້ວແລ້ວ ຂຸນລູກໍກັບຄືນສູ່ເມືອງຊອງ ໂດຍບໍ່ຍອມເບິ່ງຫນ້າ ເອີກແພນເລີຍ. ທ້າວກ່າວອຳລາແມ່ນາງອົ້ວວ່າ :

" ຫລານຊິເມືອກ່ອນແລ້ວ ຈອມແພງພະແມ່ ແມ່ນວ່າວອນແສນປີກໍບໍ່ຄືນມາໄດ້ ຫລານຈັກຄືນເມືອຫ້ອງ ເມືອງຊອງຣຽມກ່ອນ ເຈົ້າຜີນ້ອງລຸງປ້າຄ່ອຍຢູ່ດີ ບຸນບໍ່ເຄີຍສ້າງເປັນເຂີຍເຈົ້າຫົວແມ່ ເສຍນໍ ບຸນຫາກເຫັນຫນ້າອົ້ວທໍ່ນີ້ແລ້ວ ເວນຊ້ຳແລ່ນເຖິງ ... "

ຂຸນລູພາບໍລິວານກັບຄືນເມືອງຊອງ ດ້ວຍອາການຫງ່ອມເຫງົາ ຄືດັ່ງເດີນທາງສູ່ປ່າຊ້າ. ການສູນເສຍຄັ້ງນີ້ບໍ່ມີອັນໃດຈະມາທຽບໄດ້.

ບັດນີ້ ຂຸນລູເປັນຄືຮ່າງຄືງທີ່ປາສະຈາກວິນຍານ ບໍ່ກິນເຂົ້າກິນນ້ຳ ບໍ່ປາກເວົ້ານຳໃຜ ມີແຕ່ນັ່ງຊຶມຢູ່ລົມດຽວ ສາຍຕາຈ້ອງເບິ່ງບ່ອນໃດ ກໍເປັນເວລາດົນໆ. ທ້າວແນມເບິ່ງ

ສິ່ງຂອງທີ່ນາງອົ້ວເຄີຍມອບໃຫ້ ເບິ່ງຜ້າສະໄບຄຳຜືນນັ້ນ ແລ້ວກໍຮູ້ສຶກວ່າ ໃຈຊີຂາດມອດມ້ອຍໄປ. ວັນອັນຫວານຊື່ນ ໃນອະດີດຊ່າງຜ່ານໄປໄວ ວັນທີ່ທັງສອງໄປເກັບເຫັດ ຢູ່ແຄມທົ່ງນາ ໃນຕອນເຊົ້າຫລັງຈາກຄືນຝົນຕົກ; ວັນທີ່ມີດອກງິ້ວ ບານສົດໃສປາຍລະດູໜາວ, ວັນທີ່ໄປເຮົ້າປ່າຢູ່ສວນມອນ ຊຶ່ງມີນົກກາເວົາຮ້ອງສຽງດັງວິ່ວອນ ເປັນສຽງຮ້ອງຫາຄູ່ຂອງນົກໂຕປ່ຽວພອຍ. ທ້າວຮູ້ສຶກວ່າ ຕົນເອງປຽບຄືນົກໂຕນັ້ນ ແລ້ວກໍຮ່ຳຮອນຢູ່ໃນໃຈ ... ນົກພາກຄູ່ກໍຍັງຮ້ອງສຽງດັງ ກາພາກຮັງ ກໍຍັງຮ້ອງສຽງກ້ອງ ບາດວ່ານ້ອງພາກອ້າຍ ຄຳດຽວບໍ່ໄດ້ສັ່ງ ...

ແຕ່ວັນເຫລົ່ານັ້ນ ຈະບໍ່ຫວນຄືນມາອີກແລ້ວ, ຕໍ່ແຕ່ນີ້ບໍ່ມີນາງອົ້ວ, ມີແຕ່ຕາເວັນດວງເກົ່າ ທີ່ໃຫ້ກຳເນີດວັນໃໝ່ອັນຊ້ຳຊາກ ວັນທີ່ບໍ່ມີຄວາມໝາຍສຳລັບຂຸນລູ.

ແມ່ຂຸນລູ ກໍອຸກໃຈນຳລູກ ນາງນັ່ງຕຳໝູກຢູ່ກ້ອງລ່າງທັງຈົ່ມໃຫ້ລູກຊາຍ ທີ່ໄປມັກຜູ້ສາວເກີນຂອບເຂດ ທັງທີ່ແມ່ຜູ້ສາວບໍ່ເຫັນດີເຫັນງາມນຳ.

---

ແມ່ຈຶ່ງວ່າ : " ລູເອີຍ ນາງອົ້ວຕາຍເສຍແລ້ວ ໜີໄປເປັນອື່ນ ລູຊິໄຫ້ຄາງໄດ້ ກໍບໍ່ຄືນ ແມ່ນາ ... "

ຕໍ່ມາແມ່ເຫັນນ້ຳສີແດງຢອດລົງມາແຕ່ເທິງເຮືອນ ຕົກຖືກຜ້າທີ່ພວມຕ່ຳຢູ່ ເລີຍຄຶດວ່າ ແມ່ນສີຝາງແດງ ສຳລັບຍ້ອມຜ້າຂວ້ຳ ແລ້ວຍ້ອຍລົງມາ , ຂະນະດຽວກັນ ກໍໄດ້ຍິນສຽງຄາງອືໆ ຂອງລູກຊາຍດັງຢູ່ເທິງ. ບໍ່ດົນຕໍ່ມາ ກໍມີຄົນແລ່ນອີເລີເປີເສີ ມາບອກວ່າ :

" ຂຸນລູ ແທງຄໍຕາຍ !"



ຜູ້ເປັນແມ່ ຕົກໃຈສຸດຂີດ ລຸກອອກຈາກກີ່ແລ້ວແລ່ນໄປເບິ່ງ. ນາງໂຊມກອດເອົາລູກ ທັງຮ້ອງໄຫ້ຢ່າງໜ້າເວທະນາ, ນ້ຳຕາຂອງແມ່ຫລັ່ງອອກມາ ຢ່າງບໍ່ເຫືອດແກ້ນ. ຂຸນລູດັບຊີວິດຕົນເອງ ລາໂລກໄປ ປະໃຫ້ແມ່ ແລະ ນ້ອງພົບກັບຄວາມ ໂສກເສົ້າຢູ່ເບື້ອງຫລັງ.

ສາບຂອງຂຸນລູ ແລະ ນາງອົ້ວ ຖືກນຳໄປຍັງບ່ອນຕໍ່ແດນລະຫວ່າງເມືອງກາຍ ກັບເມືອງຊອງ ແລະ ຖືກເອົາໃສ່ໃນໂລງດຽວກັນ. ການຄົບວັນດຳເນີນໄປເປັນເວລາສາມເດືອນແລ້ວຈຶ່ງມີພິທີເຜົາໂດຍມີໄພ່ພົນຈາກສອງເມືອງມາຮ່ວມຢ່າງຫລວງຫລາຍ. ຄວັນໄຟເປັນເລົາພຸ່ງຂຶ້ນສູ່ທ້ອງຟ້າ ແລ້ວຈາງຫາຍໄປໃນຄວາມເວີ້ງວ້າງ ອັນບໍ່ມີທີ່ສິ້ນສຸດ, ວິນຍານສອງດວງ ໄດ້ລ່ອງລອຍໄປ, ເປັນວິນຍານຮັກອະມະຕະ ທີ່ບໍ່ມີສິ່ງໃດຈະໄປລຶບລ້າງໄດ້ ນອກຈາກກາລະເວລາ.

---

ເພື່ອໃຫ້ຄວາມຊົງຈຳອັນແສນເສົ້າຂອງເມືອງກາຍ ແລະ ເມືອງຊອງ ສູນສະຫລາຍໄປ ສອງຝ່າຍຕົກລົງຂອດຄວາມຮັກຄວາມແພງກັນໃຫມ່ ໂດຍໃຫ້ ຂຸນຄວນ ນ້ອງຊາຍຂຸນລູ ແຕ່ງດອງກັບ ເອິກແພນ ເອື້ອຍຂອງອົ້ວຄ່ຽມ, ແລ້ວນາງກໍໄປເປັນໃພ້ຢູ່ເມືອງຊອງ.

ສຸດບໍ່ລະບວນ

ອະທິບາຍສັບ

ນົກກາເວົາ : ນົກສີດຳ ຄ້າຍຄືກາແຕ່ຕົວນ້ອຍຮ້ອງສຽງມ່ວນ ອອນຊອນ, ບາງທ້ອງຖິ່ນ ເອີ້ນນົກໂກໂວ.

ກວານຈ້ຳ : ຜູ້ຕິດຕໍ່ກັບຜີອາຮັກ ຜີບ້ານ;
ຜູ້ເປັນສື່ລະຫວ່າງຄົນກັບຜີແຖນ;
ຈ້ຳ ກໍວ່າ.

ຄາຄວາມ : ຕິດຢູ່ກັບສັນຍາ, ມີພັນທະຕ້ອງເຮັດຕາມທີ່ໄດ້ເວົ້າໄວ້.

ຈວງຈັນ : ໄມ້ແນວຫນຶ່ງ ແກ່ນມີກິ່ນຫອມ; ຈວງ ກໍວ່າ

ຊຸມພູ : ຕົ້ນໄມ້ຊະນິດຫນຶ່ງ ມີຫນ່ວຍຊ້ຳ ຄືຫມາກຜັກປັງ ກິນໄດ້, ຕົ້ນຫວ້າ.

ຖົງປົ໊ຽດ : ຖົງພາຍສານດ້ວຍປ່ານ ຂອງຊາວລາວເທິງ

ນະພາກາດະ ຟ້າ, ກາງຫາວ, ກາງອາກາດ

ແນນ : ສາຍຜູກພັນແຫ່ງຄວາມຮັກ ຊຶ່ງເຊື່ອກັນວ່າ ຈ່ອງກັນມາແຕ່ຊາດກ່ອນ, ສາຍແນນ ກໍວ່າ

ເບ້ຍ : ຫອຍຊະນິດຫນຶ່ງຫລັງນູນ ຄົນບູຮານໃຊ້ ແທນເງິນ ເພື່ອຊື້ສິນຄ້າ ໂດຍກໍານົດອັດຕາ 100 ເບ້ຍ ເທົ່າກັບ 1 ອັດ ( 100 ອັດເປັນ 1 ກີບ )

ເຜືອຂ້າ : ພວກຂ້ອຍ, ພວກເຮົາ

ລັກໃຈ : ເຮັດໂດຍບໍ່ຄອບ, ກະທໍາຢ່າງປິດລັບ

ຮ່າຍ : ອ່ານອອກສຽງເຍີ້ນ, ຮ້ອງສຽງຫນ້າອອນ ຊອນ, ຖ້າຮ້ອງຢູ່ຕົ້ນໄມ້ ເວົ້າວ່າ ຮ່າຍໄມ້ ດັ່ງທະນີຮ່າຍໄມ້

ເຮົ້າປ່າ : ໄປຫລົບມ່ອນຕາມປ່າ, ຖ້າເຂົ້າຖໍ້າເວົ້າວ່າ ເຮົ້າຖໍ້າ, ເປັນສັບທ້ອງຖິ່ນເຂດເຫນືອ. ການເຮົ້າປ່າ ເປັນປະເພນີຢ່າງຫນຶ່ງຂອງຊົນ ກຸ່ມຫນຶ່ງ ດັ່ງປາກົດຢູ່ໃນເລື່ອງ ທ້າວຮຸ່ງ-ທ້າວເຈືອງ.

ຮ້ອຍ : ເງິນຮ້ອຍເປັນເງິນໂລຫະຮູບຄືກ້ານສວຍ ໜັກ 10 ບາດ; ຖ້າເວົ້າເຖິງມາດຕາຊັ່ງ ນ້ຳໜັກ : 8 ຮ້ອຍ ເປັນ 1 ຊັ່ງ; 10 ຊັ່ງ ເປັນ 1 ໝື່ນ ( 1 ໝື່ນ = 12 ກິໂລ ); 10 ໝື່ນເປັນ1 ແສນ; 10 ແສນ ເປັນ 1 ລ້ານ.

## ຮູບການເຄື່ອນໄຫວ ສະມາຄົມ



**ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວແຫ່ງຍີ່ປຸ່ນ**

***ASPB*** ຕັ້ງຢູ່ເຮືອນເລກທີ 053/3 ຖະໜົນສາມແສນໄທ ບ້ານສີຫອມກຳແພງນະຄອນໂທລະສັບ 213449 ມີຫ້ອງ ສະໝຸດ ແລະສະຖານທີ່ ໃຫ້ເດັກນ້ອຍ ມາເຄື່ອນໄຫວເຮັດ ກິດຈະກຳຕ່າງໆ ພາຍໃຕ້ການດູແລ ຂອງນັກວິຊາການ ຜູ້ຊ່ຽວຊານ ເຊັ່ນ ນຳພາອ່ານ ນິທານ ຫລິ້ນລະຄອນຟ້ອນ ຮ້ອງເພງ ດົນຕີ ຮຽນພາສາ ພັບເຈ້ຍ ແຕ້ມຮູບ. ເປີດໃຫ້ ບໍລິການທຸກມື້ ແຕ່ວັນຈັນຫາວັນທິດ ເວັ້ນວັນພັກທາງການ ໃນອາທິດ ຕັ້ງແຕ່ 8.30 ເຊົ້າ ເຖິງ 16.00 ໂມງ.

ອຸປະຖຳໂດຍ
ສະມາຄົມສົ່ງປຶ້ມໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ

ໂຄງການປຶ້ມເພື່ອສຳລັບເດັກ

Sponsored by
ASSOCIATION FOR SENDING BOOKS
TO LAO CHILDREN OF JAPAN